ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

08-14 ກຸມພາ 2026
ປີທີ 15
ສະບັບທີ 1053
ລາຍສັປະດາ

## ພິທີໂຄສະນາຫາສຽງທີ່ຫໍປະຊຸມແຫ່ງຊາດ



(ສພຊ) - ພິທີໂຄສະນາຫາສຽງໃຫ້ແກ່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ (ນວ) ຊຸດທີ X ຈັດຂຶ້ນວັນສຸກທີ 6 ກຸມພານີ້ ທີ່ຫໍປະຊຸມແຫ່ງຊາດ ໂດຍມີຜູ້ມີສິດປ່ອນບັດເລືອກຕັ້ງທີ່ເປັນການນຳ ແລະ ພະນັກງານຫຼັກແຫຼ່ງຈາກບັນດາກະຊວງ, ອົງການ

ອ່ານຕໍ່ໜ້າ 5

## ໂຄສະນາຫາສຽງຢູ່ 2 ກຳລັງປະກອບອາວຸດ ແລະ 4 ເມືອງ ແຂວງຊຽງຂວາງ



(ສພຊ) - ເພື່ອເຊີດຊູລະດັບຄວາມຕື່ນຕົວທາງດ້ານການເມືອງຂອງປະຊາຊົນບັນດາເຜົ່າ ແລະ ຮັບປະກັນການປະຕິບັດສິດເປັນເຈົ້າຂອງປະເທດຊາດຂອງພົນລະເມືອງ ໃນການໄປໃຊ້ສິດປ່ອນບັດເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດ (ສສຊ) ຢ່າງຄົບຖ້ວນຖືກຕ້ອງຕາມລະບຽບຫຼັກການ ທັງເຮັດໃຫ້ຜູ້ມີ

ອ່ານຕໍ່ໜ້າ 5



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ພວກເຮົາຕ້ອງເສີມຂະຫຍາຍໝາກຜົນຂອງການປະຕິວັດຢ່າງບໍ່ຢຸດຢັ້ງ, ຢຶດໝັ້ນໃນຈຸດໝາຍປັບປຸງ, ຂະຫຍາຍ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ຂ້າມຜ່ານຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 346)

ພວກເຮົາຍິ່ງເຫັນແຈ້ງວ່າຄວາມສາມັກຄີປອງດອງ ເປັນປັດໄຈສຳຄັນກວ່າໝູ່ຂອງຄວາມເປັນເອກະພາບແຫ່ງຊາດ ແລະ ຄວາມຢູ່ເຢັນເປັນສຸກຂອງປະຊາຊົນ. ກົງກັນຂ້າມ, ຄວາມແຕກແຍກ, ຄວາມບໍ່ສາມັກຄີກັນ, ຄວາມເປັນປໍລະປັກຕໍ່ກັນ ຂອງປະຊາຊົນໃນຊາດ ເປັນສາເຫດຂອງຄວາມອ່ອນແອ, ເປັນເງື່ອນໄຂໃຫ້ພວກສັດຕູຕ່າງດ້າວເຂົ້າມາຮຸກຮານ, ຄອບຄອງ, ປະຊາຊົນຕົກເປັນຂ້ອຍຂ້າ, ຄວາມສີວິໄລຮຸ່ງເຮືອງຖືກຢຽບຢໍ່າທຳລາຍ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 347)

ອ່ານຕໍ່ສະບັບໜ້າ

## ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 10 ແລະ ສສຂ ລົງໂຄສະນາຫາສຽງ



ອ່ານຕໍ່ໜ້າ 6

## ການເລືອກຕັ້ງຄັ້ງນີ້ ມີຫຼາຍຈຸດພິເສດ ແລະ ມີອັນແຕກຕ່າງກັບຊຸດຜ່ານມາ

(ສພຊ) - ໂອກາດລົງເຄື່ອນໄຫວໂຄສະນາຫາສຽງໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V, ວັນທີ 14 ກຸມພາ 2026 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ສະ

ອ່ານຕໍ່ໜ້າ 5



## ທົ່ວປະເທດມີຜູ້ມີສິດເລືອກຕັ້ງ 4,764,384ຄົນ



(ສພຊ) - ຕອນສວາຍວັນພະຫັດທີ12ກຸມພານີ້,ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ໂຄສົກຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບມະຕິຂອງຄະນະກຳມະການເລືອກຕັ້ງລະດັບຊາດ ວ່າດ້ວຍການປະກາດຈຳນວນຜູ້ມີສິດເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃຫ້ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າທົ່ວປະເທດ ແລະ ຊາວລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ໄດ້ຮັບຊາບຢ່າງທົ່ວເຖິງກັນວ່າ: ປະຕິບັດຕາມາດຕາ 7 (ຜູ້ມີສິດເລືອກຕັ້ງ), ມາດຕາ 22 (ການຂຶ້ນບັນຊີຜູ້ມີສິດເລືອກຕັ້ງ) ແລະ ມາດຕາ 23 (ການຂຶ້ນບັນຊີຜູ້ມີສິດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ) ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນ

ອ່ານຕໍ່ໜ້າ 6

## ໂຄສະນາຫາສຽງຢູ່ 3 ບ້ານຂອງເມືອງບາຈຽງຈະເລີນສຸກ



ອ່ານຕໍ່ໜ້າ 12




ປັດໄຈທີ່ກໍ່ໃຫ້ເກີດ... (ໜ້າ 9)




Armenia ກຳນົດ... (ໜ້າ 10)

ເຂົ້າໃຈ ໄດ້ຂີດຮວງ
ວິເສດ ສະແຫວງສຶກສາ

ລະວັງຢາພິດ... (ໜ້າ 12)

# ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ເຂດ 13 ແລະ ສສຂ ສະຫວັນນະເຂດ ໂຄສະນາຫາສຽງຢູ່ 8 ເມືອງ




(ສພຊ) - ໃນລະຫວ່າງວັນທີ 7-14 ກຸມພາ 2026 ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ປະຈຳເຂດເລືອກຕັ້ງເມືອງພິນ, ເມືອງເຊໂປນ, ເມືອງນອງ, ເມືອງວິລະບູລີ, ເມືອງພະລານໄຊ, ເມືອງອາດສະພັງທອງ, ເມືອງອາດສະພອນ ແລະ ເມືອງໄຊບູລີ ໄດ້ລົງໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກຕັ້ງຢູ່ 8 ເມືອງດັ່ງກ່າວ ໂດຍມີອຳນາດການປົກຄອງເມືອງ, ພະນັກງານຫຼັກແຫຼ່ງ, ອຳນາດການປົກຄອງບ້ານພ້ອມດ້ວຍພໍ່ແມ່ປະຊາຊົນຜູ້ມີສິດປ່ອນບັດເລືອກຕັ້ງ ເຂົ້າຮ່ວມຢ່າງພ້ອມພຽງ.



ພາຍຫຼັງທີ່ບັນດາທ່ານຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ໄດ້ສະເໜີຕົວສຳເລັດ ກໍໄດ້ເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງ ມີຄຳຄິດຄຳເຫັນ ແລະ ຄຳສະເໜີຕ່າງໆ; ຈາກນັ້ນ, ຜູ້ສະໝັກຮັບເລືອກຕັ້ງ ກໍຮັບເອົາຄຳສະເໜີ ພ້ອມທັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ຈົ່ງພ້ອມກັນໄປໃຊ້ສິດຂອງຕົນໃນການເລືອກຕັ້ງໃນວັນອາທິດທີ 22 ກຸມພາທີ່ຈະມາເຖິງນີ້ ໃຫ້ບັນລຸຜົນສຳເລັດຕາມສີ່ລະດັບຄາດໝາຍໃນມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະ ມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຄື: 1) ນຳພາຜູ້ມີສິດເລືອກຕັ້ງໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.



ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ມີຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ຈຳນວນ 28 ທ່ານ ຍິງ 7 ທ່ານ, ເລືອກເອົາ 21 ທ່ານ ໃນນັ້ນ, ອາຍຸແຕ່ 45 ປີລົງມາ ມີ 6 ທ່ານ ຍິງ 1 ທ່ານ, 46-55 ປີມີ 14 ທ່ານ ຍິງ 4 ທ່ານ, 56-60 ປີ ມີ 5 ທ່ານ ຍິງ 1 ທ່ານ, 61 ປີຂຶ້ນໄປ ມີ 3 ທ່ານ ຍິງ 1 ທ່ານ; ເຜົ່າລາວ 27 ທ່ານ ຍິງ 7 ທ່ານ ແລະ ເຜົ່າບຣູ 1 ທ່ານ; ລະດັບວິຊາສະເພາະ ຊັ້ນປະລິນຍາຕີ 4 ທ່ານ ຍິງ 3 ທ່ານ, ປະລິນຍາໂທ 17 ທ່ານ ຍິງ 3 ທ່ານ ແລະ ປະລິນຍາເອກ 7 ທ່ານ ຍິງ 1 ທ່ານ.

ຜູ້ສະໝັກຮັບເລືອກຕັ້ງເປັນ ສສຂ ປະຈຳເຂດເລືອກຕັ້ງທັງ 8 ເມືອງ ມີເມືອງລະ 7 ທ່ານ, ເລືອກເອົາ 5 ທ່ານ.



ເມືອງພິນ ມີພົນລະເມືອງ 77,380 ຄົນ ຍິງ 38,590 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 44,775 ຄົນ ຍິງ 23,616 ຄົນ, ຜູ້ສາມາດປ່ອນບັດຢູ່ໃນບ້ານຂອງຕົນ (ຕາມສຳມະໂນຄົວ) 399,803 ຄົນ ຍິງ 21,289 ຄົນ, ຜູ້ມີສິດປ່ອນບັດເລືອກຕັ້ງຢູ່ທ້ອງຖິ່ນອື່ນ (ຕາມສຳມະໂນຄົວ) 1,062 ຄົນ ຍິງ 525, ຜູ້ໄປເຮັດວຽກຢູ່ຕ່າງປະເທດ (ຕາມສຳມະໂນຄົວ) 3,910 ຄົນ ຍິງ 1,802 ຄົນ, ທົ່ວເມືອງ ມີ 55 ໜ່ວຍປ່ອນບັດ.

ເມືອງເຊໂປນ ມີພົນລະເມືອງ 69,936 ຄົນ ຍິງ 34,928 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 40,350 ຄົນ ຍິງ 19,510 ຄົນ, ຜູ້ສາມາດປ່ອນບັດຢູ່ໃນບ້ານຂອງຕົນ (ຕາມສຳມະໂນຄົວ) 37,279 ຄົນ ຍິງ 18,365 ຄົນ, ຜູ້ມີສິດປ່ອນບັດເລືອກຕັ້ງຢູ່ທ້ອງຖິ່ນອື່ນ (ຕາມສຳມະໂນຄົວ) 1,271 ຄົນ ຍິງ 523 ຄົນ, ຜູ້ໄປເຮັດວຽກຢູ່ຕ່າງປະເທດ (ຕາມສຳມະໂນຄົວ) 226 ຄົນ ຍິງ 141 ຄົນ, ຜູ້ມີສິດປ່ອນບັດຈາກທ້ອງຖິ່ນອື່ນ 1,574 ຄົນ ຍິງ 481 ຄົນ, ທົ່ວເມືອງມີ 65 ໜ່ວຍປ່ອນບັດ.

ເມືອງນອງ ມີພົນລະເມືອງ 36,262 ຄົນ ຍິງ 17,476 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 19,348 ຄົນ ຍິງ 9,704 ຄົນ, ຜູ້ສາມາດປ່ອນບັດຢູ່ໃນບ້ານຂອງຕົນ (ຕາມສຳມະໂນຄົວ) 18,647 ຄົນ ຍິງ 9,442 ຄົນ, ຜູ້ມີສິດປ່ອນບັດເລືອກຕັ້ງຢູ່ທ້ອງຖິ່ນອື່ນ (ຕາມສຳມະໂນຄົວ) 656 ຄົນ ຍິງ 245 ຄົນ, ຜູ້ໄປເຮັດວຽກຢູ່ຕ່າງປະເທດ (ຕາມສຳມະໂນຄົວ) 45 ຄົນ ຍິງ 17 ຄົນ, ຜູ້ມີສິດປ່ອນບັດຈາກທ້ອງຖິ່ນອື່ນ 150 ຄົນ ຍິງ 54 ຄົນ, ທົ່ວເມືອງມີ 38 ໜ່ວຍປ່ອນບັດ.

ເມືອງວິລະບູລີ ມີພົນລະເມືອງ 49,764 ຄົນ ຍິງ 23,384 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 33,561 ຄົນ ຍິງ 15,265 ຄົນ, ຜູ້ສາມາດປ່ອນບັດຢູ່ໃນບ້ານຂອງຕົນ (ຕາມສຳມະໂນຄົວ) 29,198 ຄົນ ຍິງ 13,814 ຄົນ, ຜູ້ມີສິດປ່ອນບັດເລືອກຕັ້ງຢູ່ທ້ອງຖິ່ນອື່ນ (ຕາມສຳມະໂນຄົວ) 3,058 ຄົນ ຍິງ 1,061 ຄົນ, ຜູ້ໄປເຮັດວຽກຢູ່ຕ່າງປະເທດ (ຕາມສຳມະໂນຄົວ) 365 ຄົນ ຍິງ 216 ຄົນ, ຜູ້ມີສິດປ່ອນບັດຈາກທ້ອງຖິ່ນອື່ນ 940 ຄົນ ຍິງ 174 ຄົນ, ທົ່ວເມືອງມີ 46 ໜ່ວຍປ່ອນບັດ ແລະ ໜ່ວຍປ່ອນບັດເຄື່ອນທີ່ ມີ 6 ໜ່ວຍ.

ເມືອງພະລານໄຊ ມີພົນລະເມືອງ 48,128 ຄົນ ຍິງ 23,911 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 30,350 ຄົນ ຍິງ 15,610 ຄົນ, ທົ່ວເມືອງມີ 31 ໜ່ວຍປ່ອນບັດ.

ເມືອງອາດສະພັງທອງ ມີພົນລະເມືອງ 52,197 ຄົນ ຍິງ 25,872 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 33,352 ຄົນ ຍິງ 16,959 ຄົນ, ທົ່ວເມືອງມີ 47 ໜ່ວຍປ່ອຍບັດ.

ເມືອງອາດສະພອນ ມີພົນລະເມືອງ 68,648 ຄົນ ຍິງ 35,028 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 42,890 ຄົນ ຍິງ 21,390 ຄົນ, ທົ່ວເມືອງມີ 80 ໜ່ວຍປ່ອນບັດ.




ເມືອງໄຊບູລີ ມີພົນລະເມືອງ 70,030 ຄົນ ຍິງ 34,862 ຄົນ, ມີຜູ້ມີສິດປ່ອນບັດເລືອກຕັ້ງ 45,305 ຄົນ ຍິງ 23,056 ຄົນ, ທົ່ວເມືອງມີ 52 ໜ່ວຍປ່ອຍບັດ.

**(ກົງທະນູຄຳ ພິພັດເສລີ)**

# ອະນຸກຳມະການ ປກຊ-ປກສ ຕິດຕາມ, ຊຸກຍູ້ ວຽກງານເລືອກຕັ້ງຢູ່ 4 ແຂວງ




(ສພຊ) - ວັນທີ 9 ກຸມພາຜ່ານມາ, ອະນຸກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ຂອງຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ຢູ່ 3 ແຂວງ; ທັງນີ້, ກໍເພື່ອເປັນການກະກຽມ ແລະ ດຳເນີນການເລືອກຕັ້ງ ໃຫ້ມີຄວາມສະຫງົບປອດໄພ, ເປັນລະບຽບຮຽບຮ້ອຍ ແລະ ມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ.

ຍູ້ວຽກງານຂົງເຂດປກຊ-ປກສ ພາຍໃນ 7 ເມືອງ; ສຳລັບທິດທາງໃນຕໍ່ໜ້າແມ່ນໄດ້ກະກຽມຄວາມພ້ອມຮອບດ້ານ ເພື່ອຮັບປະກັນໃຫ້ແກ່ການເລືອກຕັ້ງມີຄວາມສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍ ໂດຍຈັດວາງກຳລັງໃສ່ແຕ່ລະຈຸດປ່ອນບັດໃນທົ່ວແຂວງ, ທົ່ວເມືອງ ເພື່ອຫຼີກລ່ຽງປາກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນແລະແກ້ໄຂໃຫ້ທັນກັບກຳນົດເວລາ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ແລກປ່ຽນຄຳຄິດຄຳເຫັນ, ສົນທະນາກັນຢ່າງກົງໄປກົງມາ ເພື່ອຮັບປະກັນໃຫ້ແກ່ບັ້ນເລືອກຕັ້ງມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ສີ່ຮ້ອຍສ່ວນຮ້ອຍຄື:

ມະການ ປກຊ-ປກສ ແຂວງ, ຫົວໜ້າຫ້ອງການ ປກຊ-ປກສ ແຂວງ, ກຳມະການໃນຄະນະກຳມະການເລືອກຕັ້ງຂັ້ນແຂວງ-ຂັ້ນເມືອງ ພ້ອມດ້ວຍຄະນະຮັບຜິດຊອບທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ. ໃນກອງປະຊຸມ, ຄະນະຮັບຜິດຊອບໄດ້ຂຶ້ນຜ່ານບົດລາຍງານຫຍໍ້ສະພາບການຕ່າງໆໃນການກຽມຄວາມພ້ອມແລະຈັດຕັ້ງຜັນຂະຫຍາຍແຜນປ້ອງກັນການເລືອກຕັ້ງ ໂດຍອີງໃສ່ສະພາບຈຸດພິເສດຂອງແຂວງແລະບັນດາເມືອງ,ພື້ນທີ່ລໍ່ແຫຼມເສັ້ນທາງເຂົ້າ-ອອກລະຫວ່າງແຂວງຕໍ່ແຂວງ, ເມືອງຕໍ່ເມືອງ ແລະ ເຂດຊຸມຊົນ; ອະນຸກຳມະການ ປກຊ-ປກສ ຂັ້ນແຂວງ

ຂັ້ນແຂວງ-ເມືອງ ເພື່ອກຽມພ້ອມສູ້ຮົບ ມີ 86 ສະຫາຍ, ກະກຽມພາຫະນະ, ອາວຸດຍຸດໂທປະກອນ, ເຄື່ອງເຕັກນິກວິຊາສະເພາະ ເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນ. ຈາກນັ້ນ, ຍັງໄດ້ຜ່ານຄຳແນະນຳການເພີ່ມທະວີການນຳພາ-ຊີ້ນຳວຽກງານ ປກຊ-ປກສ ໃຫ້ແກ່ການເລືອກຕັ້ງ, ຮັບຟັງການລາຍງານການກະກຽມຄວາມພ້ອມຂອງອະນຸກຳມະການ ປກຊ-ປກສ ຂອງຄະນະກຳມະການເລືອກຕັ້ງຂັ້ນເມືອງແລະຮັບຟັງ

ຊາສະເພາະທີ່ເຮັດໜ້າທີ່ ປກຊ-ປກສໃຫ້ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການຕິດຕາມ, ເພີ່ມທະວີດ້ານກຳລັງ, ພາຫະນະ ແລະ ອາວຸດຍຸດໂທປະກອນ ຕ້ອງມີການກະກຽມຄວາມພ້ອມຕະຫຼອດເວລາ ໃຫ້ມີຄວາມເຂັ້ມແຂງໃນວຽກງານຮອບດ້ານເພື່ອຕ້ານບັນຫາປາກົດການຫຍໍ້ທໍ້ ແລະ ກົນອຸບາຍຂອງສັດຕູທີ່ບໍ່ຫວັງດີທັງພາຍໃນ ແລະ ພາຍນອກ ເພື່ອບໍ່ໃຫ້ມີບັນຫາ ແລະ

ທ່ານ ພົຈວ. ສີວິໄຊ ເພັງສັນຕິສຸກ ລາຍງານໃຫ້ຮູ້ວ່າ: ພາຍຫຼັງໄດ້ຮັບຄຳສັ່ງແນະນຳ ແລະ ແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດກໍຄືແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ, ເພື່ອຮັບປະກັນໃຫ້ແກ່ການ ດຳເນີນການເລືອກຕັ້ງໃນຄັ້ງນີ້ ດຳເນີນໄປຢ່າງຖືກຕ້ອງຕາມລະບຽບການ, ມີປະສິດທິພາບແລະປະສິດທິຜົນ, ຈຶ່ງໄດ້ຈັດຕັ້ງຜັນຂະຫຍາຍ ໂດຍການສ້າງແຜນ



ການລາຍງານການກະກຽມຄວາມພ້ອມໃນການວາງແຜນວຽກງານຂອງຕົນໃນແຕ່ລະດ້ານ-ແຕ່ລະຈຸດເປົ້າໝາຍຄວາມຮັບຜິດຊອບໃນການເຄື່ອນໄຫວວຽກງານຂອງແຕ່ລະກົມກອງ ໃຫ້ໄດ້ຕາມແຜນທີ່ວາງໄວ້ຄື: ແຜນວຽກ, ແຜນງານ, ແຜນຄົນ ຢ່າງຮັດກຸມແລະເອົາໃຈໃສ່ຕໍ່ວຽກງານ ປກຊ-ປກສ ຂອງ ຄລຂ ໃຫ້ບັນລຸຜົນສຳເລັດຕາມຈຸດປະສົງແລະຄາດໝາຍ.

ທ່ານ ພົຈວ. ປອ. ມາລາ ວິລະຈິດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການກະກຽມຄວາມພ້ອມວຽກງານ ປກຊ-ປກສ ພ້ອມທັງເນັ້ນຕື່ມໃນການນຳເອົາ

ຜົນກະທົບຕໍ່ການເລືອກຕັ້ງທີ່ຈະມາຮອດໃນມໍ່ໆນີ້ ໃຫ້ມີຂະບວນການຝຶກຝົນ ແລະ ໄດ້ຕາມລະດັບຄາດໝາຍຂອງວຽກງານ ປກຊ-ປກສ.

ທ່ານ ພົຈວ. ສົມວັນ ທຳມາໄຊຮອງປະທານກປຊສ, ກຳມະການອະນຸກຳມະການ ປກຊ-ປກສ ຂອງ ຄລຊ ແລະ ທ່ານ ພົຈວ. ປອ. ວັນທອນ ສຸລິສັກ ຄະນະພັກກະຊວງ, ຮອງຫົວໜ້າກົມໃຫຍ່ຕຳຫຼວດກະຊວງປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຊຸກຍູ້ວຽກງານປກຊ-ປກສ ໃຫ້ແກ່ການເລືອກຕັ້ງ ຢູ່ກອງບັນຊາການທະຫານແຂວງຫຼວງພະ

ດຳເນີນງານ, ແຕ່ງຕັ້ງຄະນະກຳມະການຂັ້ນກອງບັນຊາການທະຫານແຂວງ, ສ້າງແຜນງົບປະມານແລະແຕ່ງຕັ້ງຄະນະຮັບຜິດຊອບ ລົງເຜີຍແຜ່ເຊື່ອມຊຶມ 4 ເອກະສານຢູ່ແຕ່ລະກົມກອງ ໂດຍແບ່ງເປັນ 3 ທິດຄື: ທິດໃຈກາງເທດສະບານ, ທິດເມືອງເໜືອ ແລະ ທິດເມືອງໃຕ້ ເຊິ່ງເລີ່ມຈັດຕັ້ງແຕ່ວັນທີ 14 ມັງກອນເປັນຕົ້ນມາໂດຍເປົ້າໝາຍເຂົ້າຮ່ວມມີຄະນະພັກ-ຄະນະບັນຊາ, ພະນັກງານ-ນັກຮົບ. ນອກຈາກນັ້ນ, ຍັງໄດ້ແຕ່ງຕັ້ງຄະນະກຳມະການຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ໂດຍປະຕິບັດຕາມແຈ້ງການສະບັບເພີ່ມຕື່ມຂອງກະຊວງ




ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມໂດຍການເປັນປະທານຮ່ວມຂອງທ່ານ ພົຕ. ປອ. ວິງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ), ກຳມະການອະນຸກຳມະການປກຊ-ປກສ ຂອງ ຄລຊ ແລະ ທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ, ກຳມະການຄະນະກຳມະການເລືອກຕັ້ງຂັ້ນແຂວງ (ຄລຂ), ມີບັນດາທ່ານໃນອະນຸກຳມະການປກຊ-ປກສ ຂອງ ຄລຂ ເຂົ້າຮ່ວມ. ໃນວາລະດຳເນີນກອງປະຊຸມ, ອະນຸກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນແຂວງ ໄດ້ລາຍງານການເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານ ປກຊ-ປກສ ໃຫ້ແກ່ການກະກຽມເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໄລຍະຜ່ານມາ ເຊິ່ງໄດ້ຈັດກອງປະຊຸມປຶກສາຫາລື, ລົງເຄື່ອນໄຫວຕິດຕາມ ແລະ ຊຸກ

1) ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.

ທີ່ກອງບັນຊາການປ້ອງກັນຄວາມສະຫງົບແຂວງຜົ້ງສາລີ ໄດ້ຈັດກອງປະຊຸມໂດຍການເປັນປະທານຮ່ວມຂອງທ່ານ ພົຈວ. ປອ. ມາລາ ວິລະຈິດ ຮອງປະທານ ກປຊສ, ກຳມະການອະນຸກຳມະການ ປກຊ-ປກສ ຂອງ ຄລຊ ແລະ ທ່ານ ພົຈວ. ບົວວັນ ອາດຖະໜາໄຊ ຫົວໜ້າຫ້ອງການ ປກຊ-ປກສ ສູນກາງພັກ, ມີບັນດາຄະນະກຳ

ໄດ້ຈັດວາງກຳລັງ ແລະ ກຳນົດຈຸດປ່ອນບັດຂອງສອງກຳລັງ ເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນການເລືອກຕັ້ງຢູ່ໃນຂອບເຂດທົ່ວແຂວງ ເຊິ່ງໄດ້ແຕ່ງຕັ້ງຄະນະຊີ້ນຳລວມຂັ້ນແຂວງ 6 ສະຫາຍ, ຄະນະຊີ້ນຳປ້ອງກັນຕົວຈິງປກຊ-ປກສ ແຂວງ-ເມືອງ 58 ສະຫາຍ, ຈຸດປ້ອງກັນໜ່ວຍປ່ອນບັດໃນທົ່ວແຂວງ ມີ 201 ໜ່ວຍ, ໜ່ວຍກຳລັງ ປກຊ ແຂວງ ມີ 4 ໜ່ວຍ, ໜ່ວຍກຳລັງ ປກສ ແຂວງ ມີ 2 ໜ່ວຍ ແລະ ໜ່ວຍປ່ອນບັດເຄື່ອນທີ່ມີ 162 ໜ່ວຍ, ນຳໃຊ້ກຳລັງປ້ອງກັນ 804 ຄົນ (ນອກນີ້, ຍັງມີກຳລັງ ປກສ-ກອງຫຼອນບ້ານເປັນກຳລັງເສີມໃນການປ້ອງກັນແຕ່ລະຈຸດ), ສຳລັບຈຸດມີຄວາມສ່ຽງ ແລະ ຈຸດຊາຍແດນເຂົ້າ-ອອກ ໄດ້ກຳນົດແຜນປ້ອງກັນມອບໃຫ້ ປກສ ກຸ່ມບ້ານ ສົມທົບກັບກຳລັງ ປກສ-ກອງຫຼອນ ປະຈຳການຍາມ; ນອກຈາກນັ້ນ, ສອງກຳລັງໄດ້ກະກຽມກຳລັງສຳຮອງຢູ່



ແຜນການຂອງວຽກງານດັ່ງກ່າວໄປເຊື່ອມຊຶມ, ຜັນຂະຫຍາຍ ແລະສຶກສາອົບຮົມຕໍ່ພະນັກງານ ແລະ ການຈັດຕັ້ງທຸກຂັ້ນ ໃຫ້ເຂົ້າໃຈ ແລະ ສຸມສະຕິປັນຍາເຫື່ອແຮງ ປະກອບສ່ວນຕໍ່ວຽກງານດັ່ງກ່າວດ້ວຍຄວາມຮັບຜິດຊອບສູງ; ກຳນົດແຜນການເຄື່ອນໄຫວຂອງເມືອງ ໃນການບ່ອນບັດເລືອກຕັ້ງຕາມຈຸດຕ່າງໆແລະເພີ່ມທະວີນຳພາ-ຊີ້ນຳພະແນກວິ

ບາງ ໂດຍໄດ້ເຮັດວຽກຮ່ວມກັບທ່ານ ພົຈວ. ສີວິໄຊ ເພັງສັນຕິສຸກ ກຳມະການປະຈຳພັກແຂວງ, ຫົວໜ້າການເມືອງກອງບັນຊາການທະຫານແຂວງ, ບັນດາຄະນະກຳມະການເລືອກຕັ້ງຂັ້ນແຂວງ, ເມືອງ-ນະຄອນ, ຄະນະຮັບຜິດຊອບວຽກງານປກຊ-ປກສອ້ອມຂ້າງກອງບັນຊາການທະຫານແຂວງ ແລະ ກອງບັນຊາການ ປກສ ແຂວງ.

ປ້ອງກັນປະເທດແລະມະຕິຂອງ ຄລຂ ໄດ້ແບ່ງອອກເປັນ 13 ໜ່ວຍປ່ອນບັດແລະ 8 ຖົງປ່ອນບັດເຄື່ອນທີ່; ແຕ່ງຕັ້ງຄະນະກຳມະການຮັບຜິດຊອບວຽກງານ ປກຊ-ປກສ ແລະ ຈັດກອງປະຊຸມປຶກສາຫາລື, ມອບໝາຍຄວາມຮັບຜິດຊອບໃຫ້ແຕ່ລະຂົງເຂດ, ແຕ່ລະສະຫາຍ ຮັບຜິດ

ອ່ານຕໍ່ໜ້າ 4

# ມອບ-ຮັບ ແຜນຜັງຫໍສະພາແຫ່ງຊາດ



(ສພຊ) - ວັນທີ 6 ກຸມພາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເອກະສານແບບແຜນຜັງເຕັກນິກຂອງໂຄງການປຸກສ້າງຫໍສະພາແຫ່ງຊາດລາວ ລະຫວ່າງຫ້ອງວ່າການສະພາແຫ່ງຊາດລາວ ແລະ ຄະນະຄຸ້ມຄອງໂຄງການລົງທຶນກໍ່ສ້າງສະເພາະການ, ກະຊວງກໍ່ສ້າງແຫ່ງ ສສ.ຫວຽດນາມ ພາຍຫຼັງໄດ້ດຳເນີນການປັບປຸງແບບແຜນຜັງອາຄານຫໍສະພາແຫ່ງຊາດ ສຳເລັດຢ່າງສົມບູນ; ຕາງໜ້າຝ່າຍລາວໂດຍສະຫາຍ ປອ. ບຸນທັນ ບຸນວິໄລ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຕາງໜ້າຝ່າຍຫວຽດນາມໂດຍສະຫາຍ ໂດ ຖຽວ ກວາງ (Do Thieu Quang) ຮອງຫົວໜ້າຄະນະຄຸ້ມຄອງໂຄງການລົງທຶນກໍ່ສ້າງສະເພາະການ, ກະຊວງກໍ່ສ້າງແຫ່ງ ສສ.ຫວຽດນາມ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ທັງນີ້, ເພື່ອມອບໃຫ້ຫ້ອງວ່າການສະພາແຫ່ງຊາດລາວ ໄດ້ປົກປັກຮັກສາ ແລະ ນຳໃຊ້ເຂົ້າໃນການຄຸ້ມຄອງອາຄານຕໍ່ໄປ.

ສະຫາຍ ປອ. ບຸນທັນ ບຸນວິໄລ ໃຫ້ຮູ້ວ່າ: ໂຄງການປຸກສ້າງຫໍສະພາແຫ່ງຊາດລາວຫຼັງໃໝ່ ໄດ້ເລີ່ມລົງມືຈັດຕັ້ງປະຕິບັດມາຮອດປີ 2021 ແມ່ນສຳເລັດຢ່າງສົມບູນ 100% ພ້ອມມອບ-ຮັບໃຫ້ເລີ່ມນຳໃຊ້ອາຄານດັ່ງກ່າວ ຈົນມາຮອດປັດຈຸບັນ; ພາຍຫຼັງການກໍ່ສ້າງສຳເລັດ, ຄະນະຄຸ້ມຄອງໂຄງການລົງທຶນກໍ່ສ້າງສະເພາະການ, ກະຊວງກໍ່ສ້າງແຫ່ງ ສສ.ຫວຽດນາມ ຍັງໄດ້ເອົາໃຈໃສ່ນຳພາ-ນຳຊີ້ພາກສ່ວນກ່ຽວຂ້ອງ ເພື່ອປັບປຸງແບບແຜນຜັງເຕັກນິກອາຄານຫໍສະພາແຫ່ງຊາດ ໃຫ້ເປັນໄປຕາມການກໍ່ສ້າງຕົວຈິງ ແນໃສ່ສ້າງເປັນເອກະສານທີ່ສຳຄັນ ທັງອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງອາຄານ ໃນການສ້ອມແປງປ່ຽນຖ່າຍອຸປະກອນຮັບໃຊ້ຕ່າງໆ ທັງພາຍໃນແລະພາຍນອກອາຄານ ໃຫ້ມີຄວາມຖືກຕ້ອງກັບຕົວຈິງ. ສະຫາຍຍັງໃຫ້ຄຳໝັ້ນສັນຍາວ່າ ຈະເກັບຮັກສາໄວ້ເປັນຢ່າງດີ ແລະ ສືບຕໍ່ສຶກສາແບບແຜນຜັງເຂົ້າໃນການຄຸ້ມຄອງອາຄານຕໍ່ໄປ ເພື່ອຮັບປະກັນໃຫ້ສາມາດນຳໃຊ້ອາຄານໄດ້ຢ່າງຍາວນານ.

ຈາກນັ້ນ, ສອງຝ່າຍໄດ້ມີການເຊັນບົດບັນທຶກມອບ-ຮັບເອກະສານແບບແຜນຜັງເຕັກນິກຂອງໂຄງການປຸກສ້າງຫໍສະພາແຫ່ງຊາດລາວຈຳນວນ19ແຟ້ມ.

**(ນາງ ອາລິນ ສຸພົມມະປະດິດ)**

# ໂຮງຮຽນ ແມຈິກພາມສ໌ ຢ້ຽມຊົມ ຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ ສພຊ



(ສພຊ) - ວັນທີ 13 ກຸມພາ2026ກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບ ແລະ ນຳພານັກຮຽນຈາກໂຮງຮຽນນານາຊາດ ອະນຸບານ, ປະຖົມ ແລະ ມັດທະຍົມສົມບູນ ແມຈິກພາມສ໌ ຈຳນວນ 88 ຄົນ ເຊິ່ງນຳໂດຍອາຈານ ບົວວັນ ທີລະກຸນ ຫົວໜ້າສາຍຊັ້ນປະຖົມ ທີ່ມາທັດສະນະສຶກສາຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ.

ການມາທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ,ຢ້ຽມຊົມການວາງສະແດງວັດຖຸພັນຕ່າງໆ,ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງ ສະພາແຫ່ງຊາດ ຊຸດປັດຈຸບັນ (ຊຸດທີ IX) ແລະ ນ້ອງນັກຮຽນໄດ້ຕອບຄຳຖາມເພື່ອຮັບປຶ້ມທີ່ລະນຶກຈາກ ສພຊ; ຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ ເຮັດໃຫ້ນ້ອງໆນັກຮຽນ, ຄູ-ອາຈານ ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ນິດຕາ ຄຸນປາກດີ)**

# ຄະນະຜູ້ແທນລາວເຂົ້າຮ່ວມສັງເກດການເລືອກຕັ້ງໄທ



(ສພຊ) - ວັນທີ 5-9 ກຸມພາ 2026, ອີງຕາມການເຊື້ອເຊີນຂອງເລຂາທິການໃຫຍ່ຄະນະກຳມະການເລືອກຕັ້ງ ແຫ່ງລາຊະອານາຈັກໄທ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ນາງ ນິດແກ້ວ ຄຳມີ ຮອງຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ ໄດ້ຮັບການມອບໝາຍໃຫ້ເດີນທາງເຂົ້າຮ່ວມສັງເກດການເລືອກຕັ້ງສະມາຊິກສະພາຜູ້ແທນລາດສະດອນໄທ (ສສ) ເຊິ່ງມີຜູ້ເຂົ້າຮ່ວມສັງເກດການຈາກ 18 ອົງການລະຫວ່າງປະເທດ, ຕົວແທນສະຖານທູດຈາກປະເທດຕ່າງໆທີ່ປະຈຳການຢູ່ປະເທດໄທ 53 ປະເທດ ແລະ ຜູ້ຕາງໜ້າຈາກປະເທດຕ່າງໆ 14 ປະເທດ ລວມຜູ້ເຂົ້າຮ່ວມທັງໝົດ 144 ທ່ານ.

ການເຂົ້າຮ່ວມສັງເກດການເລືອກຕັ້ງຄັ້ງນີ້, ປະເທດເຈົ້າພາບໄດ້ຈັດກອງປະຊຸມເພື່ອແນະນຳ,ແຈ້ງໃຫ້ຜູ້ແທນທັງໝົດຊາບກ່ຽວກັບຫຼັກການການເລືອກຕັ້ງ ແລະ ການລົງປະຊາມະຕິ; ມີການແນະນຳໃນການລົງສັງເກດການເລືອກຕັ້ງຕົວຈິງ, ການລົງຕິດຕາມການແຈກຢາຍອຸປະກອນການເລືອກຕັ້ງ, ການເປີດ-ປິດຫີບໜ່ວຍເລືອກຕັ້ງ ແລະ ຂະບວນການລົງຄະແນນສຽງໃນການເລືອກຕັ້ງ ແລະ ການລົງປະຊາມະຕິ ຢູ່ໃນເຂດນະຄອນຫຼວງບາງກອກ ແລະ ເຂດນົນທະບູລີ ພ້ອມທັງຕິດຕາມການນັບຄະແນນຢູ່ສຳນັກງານໃຫຍ່ຂອງຄະນະກຳມະການເລືອກຕັ້ງ.

ໂດຍອີງຕາມລັດຖະທຳມະນູນສະບັບປັດຈຸບັນ, ການເລືອກຕັ້ງສະມາຊິກສະພາຜູ້ແທນລາດສະດອນຂອງໄທ ກຳນົດຈັດຂຶ້ນໃນວັນທີ 8 ກຸມພາ 2026 ນັບແຕ່ເວລາ 08:00-17:00 ໂມງຕາມເວລາທ້ອງຖິ່ນ,ສະພາຜູ້ແທນລາດສະດອນໄທ ມີທັງໝົດ500ທີ່ນັ່ງ(ແບ່ງອອກເປັນ ສສ ແບບແບ່ງເຂດ 400 ທີ່ນັ່ງ ແລະ ແບບບັນຊີລາຍຊື່ 100 ທີ່ນັ່ງ); ໃນການເລືອກຕັ້ງຄັ້ງນີ້ເປັນຄັ້ງທຳອິດທີ່ມີການໃຫ້ປະຊາຊົນລົງປະຊາມະຕິ "ເຫັນດີ ຫຼື ບໍ່ເຫັນດີ" ໃນບັນຫາສຳຄັນຂອງຊາດ ເຊິ່ງປັດຈຸບັນ ໄທກຳລັງມີການປຶກສາຫາລືເລື່ອງການລົງປະຊາມະຕິເພື່ອປັບປຸງຮ່າງລັດຖະທຳມະນູນ.

ພາຍຫຼັງຈາກປິດຫີບ (17:00 ໂມງ) ໂດຍການໃຊ້ລະບົບການລາຍງານຜົນແບບດິຈິຕອນ ມາຈາກການນັບຄະແນນຢູ່ແຕ່ລະໜ່ວຍເລືອກຕັ້ງທົ່ວປະເທດ ແລ້ວສົ່ງຂໍ້ມູນເຂົ້າສູ່ລະບົບກາງ; ຜົນການນັບຄະແນນຫຼ້າສຸດ (ຈາກຂໍ້ມູນນັບແລ້ວ 94% ຮອດເວລາ 21:14 ໂມງ ຂອງວັນທີ 11 ກຸມພາ 2026) ພັກພູມໃຈໄທ (ພັກລັດຖະບານປັດຈຸບັນ) ໄດ້ຮັບຄະແນນສູງສຸດ ຄາດຄະເນຈຳນວນ ສສ 193 ທີ່ນັ່ງ ແລະ ຮອງລົງມາແມ່ນພັກປະຊາຊົນ 118 ທີ່ນັ່ງ, ພັກເພື່ອໄທ 74 ທີ່ນັ່ງ, ພັກກ້າທຳ 58 ທີ່ນັ່ງ, ພັກປະຊາທິປັດ 22 ທີ່ນັ່ງ. ພາຍຫຼັງເລືອກຕັ້ງ, ສະມາຊິກສະພາຜູ້ແທນລາຊະດອນ ຈຳນວນ 500 ທີ່ນັ່ງ ແລະ ສະມາຊິກວຸດທິສະພາ ຫຼື ສະພາສູງ (ສວ) ຈຳນວນ 250 ທີ່ນັ່ງ ຕາມເງື່ອນໄຂສະເພາະຂອງລັດຖະທຳມະນູນ ຈະຮ່ວມກັນລົງຄະແນນສຽງເລືອກຕັ້ງນາຍົກລັດຖະມົນຕີ.

## ອະນຸກຳມະການ...

(ຕໍ່ຈາກໜ້າ 3)

ຊອບແຕ່ລະຈຸດ, ແຕ່ລະເມືອງ ເພື່ອຮັບປະກັນໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100%.

ກອງປະຊຸມຕິດຕາມ, ຊຸກຍູ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຢູ່ແຂວງອຸດົມໄຊ ໄດ້ຈັດຂຶ້ນໃນວັນພຸດທີ 11 ກຸມພາ ທີ່ສະໂມສອນກອງບັນຊາການທະຫານແຂວງ ໂດຍການເປັນປະທານຂອງທ່ານ ພົຈວ. ປອ. ມາລາ ວິລະຈິດ, ມີທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ທັງເປັນຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ບັນດາຄະນະພັກ-ຄະນະກອງບັນຊາການທະຫານ-ຕຳຫຼວດ, ຫ້ອງການຄະນະກຳມະການ ປກຊ-ປກສ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ, ຄະນະຮັບຜິດຊອບໄດ້ຜ່ານບົດລາຍງານຫຍໍ້ສະພາບການຕ່າງໆໃນການກຽມຄວາມພ້ອມ ແລະ ຈັດຕັ້ງຜັນຂະຫຍາຍແຜນປ້ອງກັນໃຫ້ມີຄວາມສະຫງົບປອດໄພ,ເປັນລະບຽບຮຽບຮ້ອຍ ແລະ ມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ ເຊິ່ງໄລຍະຜ່ານມາ ອະນຸກຳມະການ ປກຊ-ປກສ ຂັ້ນແຂວງໄດ້ຈັດກອງປະຊຸມປຶກສາຫາລື, ລົງເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ການກຽມຄວາມພ້ອມໃນຂົງເຂດກຳລັງ ປກຊ-ປກສ ພາຍໃນ 7 ເມືອງ, ກຸ່ມບ້ານ; ຈັດວາງກຳລັງໃສ່ແຕ່ລະຈຸດປ່ອນບັດໃນທົ່ວແຂວງ, ທົ່ວເມືອງ ເພື່ອຫຼີກລ່ຽງປາກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນ ແລະ ແກ້ໄຂໃຫ້ທັນກັບກຳນົດເວລາ ໂດຍໄດ້ແຕ່ງຕັ້ງຄະນະຊີ້ນຳລວມຂັ້ນແຂວງ, ຄະນະຊີ້ນຳປ້ອງກັນຕົວຈິງ ປກຊ-ປກສ ແຂວງ-ເມືອງ, ຈຸດປ້ອງກັນໜ່ວຍປ່ອນບັດໃນທົ່ວແຂວງ, ໜ່ວຍກຳລັງ ປກຊ-ປກສແຂວງ, ໜ່ວຍປ່ອນບັດເຄື່ອນທີ່ ແລະ ກຳລັງປ້ອງກັນ; ນອກນີ້, ຍັງມີກຳລັງປກສ-ກອງຫຼອນບ້ານເປັນກຳລັງເສີມໃນການປ້ອງກັນ. ນອກຈາກນັ້ນ, ສອງກຳລັງໄດ້ກະກຽມກຳລັງສຳຮອງຢູ່ຂັ້ນແຂວງ-ເມືອງ ເພື່ອກຽມພ້ອມສູ້ຮົບ ແລະ ກະກຽມພາຫະນະ, ອາວຸດຍຸດໂທປະກອນ, ເຄື່ອງເຕັກນິກວິຊາສະເພາະ ເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນໃຫ້ມີຄວາມສະຫງົບປອດໄພ 100%.




## ພິທີ...

(ຕໍ່ຈາກໜ້າ 1)

ຈັດຕັ້ງພັກ-ລັດ, ຄະນະກຳມະການແລະອະນຸກຳມະການເລືອກຕັ້ງລະດັບຊາດ ແລະ ນວ, ພະແນກການ ແລະ ອົງການທຽບເທົ່າ ອ້ອມຂ້າງ, ນັກທຸລະກິດເຂົ້າຮ່ວມຢ່າງຫຼວງຫຼາຍ.

ການລົງພົບປະ ແລະ ແນະນຳຕົວຂອງຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 1 ຄັ້ງນີ້ ເປັນການຈັດຕັ້ງປະຕິບັດຕາມມາດຕາ18 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງປີ 2024 ແນໃສ່ເຮັດໃຫ້ການປ່ອນບັດເລືອກຕັ້ງມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ ໂດຍແມ່ນຂັ້ນຕອນໜຶ່ງທີ່ມີບົດບາດຕັດສິນຕໍ່ຜົນການເລືອກຕັ້ງ, ເປັນການສະໜອງຂໍ້ມູນຂ່າວສານຕົວຈິງ, ເປັນການແນະນຳໃຫ້ຜູ້ມີສິດເລືອກຕັ້ງຮັບຮູ້ເຂົ້າໃຈຢ່າງຖືກຕ້ອງຕໍ່ຜູ້ສະໝັກຮັບເລືອກຕັ້ງແຕ່ລະທ່ານ ທັງເປັນການສ້າງໂອກາດໃຫ້ຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ ໄດ້ພົບປະ ແລະ ແລກປ່ຽນຄຳເຫັນເຊິ່ງກັນແລະກັນກ່ອນການເລືອກຕັ້ງ ເພື່ອເປັນບ່ອນອີງໃນການຄົ້ນຄວ້າ, ຄົ້ນຄິດ ສົມທຽບໃສ່ມາດຕະຖານເພື່ອພິຈາລະນາແລະຕັດສິນໃຈເລືອກເອົາຜູ້ທີ່ຕົນເຫັນວ່າມີມາດຕະຖານຄົບຖ້ວນກວ່າໝູ່ເຂົ້າໃນສະພາແຫ່ງຊາດ ເພື່ອເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນລາວບັນດາເຜົ່າ.

ໂອກາດນີ້, ບັນດາຜູ້ສະໝັກຮັບເລືອກຕັ້ງ ກໍໄດ້ຜັດປ່ຽນກັນແນະນຳຕົວ ພ້ອມທັງສະເໜີປະຫວັດຫຍໍ້ຂອງຕົນຕໍ່ຜູ້ມີສິດປ່ອນບັດເລືອກຕັ້ງ.

ເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ມີຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ25ທ່ານ ເປັນຍິງ 7 ທ່ານ, ເລືອກເອົາ 19 ທ່ານ; ການປ່ອນບັດເລືອກຕັ້ງແມ່ນຈະຈັດຂຶ້ນໃນວັນອາທິດທີ 22 ກຸມພາ 2026.

## ການເລືອກຕັ້ງ...

(ຕໍ່ຈາກໜ້າ 1)

ໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ນ້ຳເບີ 1 ໄດ້ໃຫ້ສຳພາດຕໍ່ສື່ມວນຊົນກ່ຽວກັບການໂຄສະນາຫາສຽງວ່າ: ການເລືອກຕັ້ງຄັ້ງນີ້ ມີຄວາມສຳຄັນຫຼາຍ ເນື່ອງຈາກວ່າເປັນການເລືອກຕັ້ງໃນບັນຍາກາດທີ່ປະເທດເຮົາຫາກໍສຳເລັດການສະເຫຼີມສະຫຼອງ 3 ວັນປະຫວັດສາດ ໃນທ້າຍປີ 2025 ຜ່ານມາຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ, ວັນສະຖາປະນາ ສປປລາວ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105ປີ; ໃນຕົ້ນເດືອນມັງກອນປີນີ້ ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ກໍໄດ້ສຳເລັດຜົນຢ່າງຈົບງາມ. ສຳລັບການເລືອກຕັ້ງ ສສຊ ແລະ ສສຂ ໃນຄັ້ງນີ້ ເປັນເຫດການສຳຄັນ ແລະ ກໍເປັນວັນບຸນໃຫຍ່ຂອງຊາດໃນທົ່ວປະເທດ

ເຊິ່ງມີຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຈຳນວນ 243 ທ່ານ ເພື່ອເລືອກເອົາ 175 ທ່ານ ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ມີຈຳນວນ 1,041 ທ່ານ ເລືອກເອົາ 745 ທ່ານ. ສະເພາະເຂດເລືອກຕັ້ງທີ 13 ມີຜູ້ລົງສະໝັກຮັບເລືອກຕັ້ງເປັນຈຳນວນຫຼາຍເຖິງ 28 ທ່ານ; ສະນັ້ນ, ໄດ້ມີການແບ່ງກັນເປັນສອງຄະນະໃນການລົງໂຄສະນາຫາສຽງເຊິ່ງມາຮອດວັນທີ 14 ກຸມພານີ້ ຄະນະທີ 1 ກໍໄດ້ລົງຫາສຽງແລະສະເໜີຕົວແລ້ວ 9 ເມືອງ ແລະ ຍັງອີກ 5-6 ວັນ ກໍຈະສຳເລັດ ແລະ ຈະສິ້ນສຸດໃນວັນທີ20 ກຸມພາ ຢູ່ທີ່ນະຄອນໄກສອນ ພົມວິຫານ.

ການເລືອກຕັ້ງຄັ້ງນີ້ທຽບໃສ່ຄັ້ງຜ່ານມາ ແມ່ນມີຄວາມແຕກຕ່າງກັນ ເນື່ອງຈາກວ່າໄດ້ມີຄາດໝາຍວາງໄວ້ ເປັນຕົ້ນຊຸດທີ່ຜ່ານມາ ວາງຄາດໝາຍ 300% ຊຸດນີ້ແມ່ນ 400% ຄື: ໜຶ່ງ: ປະຊາຊົນຜູ້ມີສິດເລືອກຕັ້ງໄປເລືອກຕັ້ງຄົບຈຳນວນ100%, ສອງ: ຜູ້ມີສິດເລືອກຕັ້ງ ຮູ້ນຳໃຊ້ສິດຕາມລະບຽບກົດໝາຍ ໂດຍສະເພາະແມ່ນກົດໝາຍການເລືອກຕັ້ງໃຫ້ໄດ້100%, ສາມ: ຮັບປະກັນຄວາມສະຫງົບປອດໄພໃຫ້ແກ່ການເລືອກຕັ້ງ100%, ສີ່: ການເລືອກຕັ້ງມີຄວາມໂປ່ງໃສ ແລະ ທັນເວລາ 100%. ຈຸດພິເສດອັນທີ1 ໃນການເລືອກຕັ້ງຄັ້ງນີ້ ແມ່ນການນຳເອົາຜູ້ສະໝັກຮັບເລືອກຕັ້ງເປັນຄົນໜຸ່ມ, ຜູ້ມີອາຍຸຮຸ່ນກາງ ຈຳນວນຫຼາຍຂຶ້ນ ສ່ວນຮຸ່ນອາວຸໂສ ກໍມີພຽງ 10-15%; ອັນທີ 2 ແມ່ນການທີ່ທາງສູນກາງພັກ ໃຫ້ຄວາມສຳຄັນແກ່ເພດຍິງລົງສູ່ເວທີການເມືອງ, ລົງເປັນຜູ້ສະໝັກຮັບເລືອກຕັ້ງ ເພື່ອໃຫ້ຜູ້ມີສິດປ່ອນບັດເລືອກຕັ້ງ ເລືອກເອົາໃຫ້ໄດ້ 30% ຂຶ້ນໄປ ຂອງຈຳນວນຜູ້ສະໝັກທັງໝົດ. ນອກນັ້ນ, ຍັງແຕກຕ່າງຈາກຊຸດຜ່ານມາຍ້ອນວ່າ ໄດ້ມີການຕົກລົງເອົາການນຳຂັ້ນສູງ ຈຳນວນ 36 ທ່ານ ລົງສະໝັກຮັບເລືອກຕັ້ງໂດຍສະເພາະແມ່ນມີຂັ້ນກຳມະການກົມການເມືອງສູນກາງພັກ 4 ທ່ານ, ເລຂາທິການສູນກາງພັກ1 ທ່ານ ແລະ ກຳມະການສົມບູນ ແລະ ສຳຮອງສູນກາງພັກ ຈຳນວນ 31 ທ່ານ; ອັນພິເສດແມ່ນ ເປັນຄັ້ງທຳອິດທີ່ໃຫ້ບັນດາເລຂາພັກແຂວງ ລົງສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ທັງຈະເປັນປະທານສະພາປະຊາຊົນຂັ້ນແຂວງ ໃນ 18 ເຂດເລືອກຕັ້ງທົ່ວປະເທດ. ລວມຄວາມແລ້ວ ຖືວ່າການເລືອກຕັ້ງຄັ້ງນີ້ ແມ່ນມີຫຼາຍຈຸດພິເສດ ແລະ ມີອັນແຕກຕ່າງກັນໃນຊຸດຜ່ານມາ, ແຕ່ສິ່ງຄ້າຍຄືກັນ ກໍແມ່ນການເຮັດໃຫ້ຜູ້ມີສິດເລືອກຕັ້ງທັງໝົດ ສາມາດໄປໃຊ້ສິດປະຊາທິປະໄຕຂອງຕົນຕາມທີ່ລະບຽບກົດໝາຍວາງໄວ້.

ທ່ານປອ. ນາງສູນທອນ ໄຊຍະຈັກ ຫວັງຢ່າງຍິ່ງວ່າ: ການເລືອກຕັ້ງຄັ້ງນີ້ ພວກເຮົາຈະສາມາດບັນລຸໄດ້ເປົ້າໝາຍແລະລະດັບຄາດໝາຍທີ່ວາງໄວ້ເພື່ອປະກອບສ່ວນເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມໝັ້ນຄົງ ພ້ອມທັງຫວັງວ່າ ບັນດາທ່ານຜູ້ມີສິດເລືອກຕັ້ງໃນທົ່ວປະເທດ ຈະຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ ເພື່ອໄປນຳໃຊ້ສິດໃນວັນອາທິດທີ 22 ກຸມພາທີ່ຈະມາເຖິງນີ້ ໃຫ້ທົ່ວເຖິງກັນໃນທົ່ວປະເທດ; ຂໍອວຍພອນໃຫ້ບັນດາທ່ານຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງທັງໝົດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຜົນສຳເລັດໃນໜ້າທີ່ວຽກງານ ແລະ ປະສົບຜົນສຳເລັດໃນການເລືອກຕັ້ງຄັ້ງນີ້ຢ່າງຈົບງາມ.




## ໂຄສະນາ...

(ຕໍ່ຈາກໜ້າ 1)

ສິດເລືອກຕັ້ງ ໄດ້ຮູ້ໄດ້ເຫັນຜູ້ສະໝັກຮັບເລືອກຕັ້ງ ແລະ ກໍາໄດ້ຊີວະປະຫວັດ, ຄຸນສົມບັດ, ຄວາມຮູ້ຄວາມສາມາດ, ທັດສະນະ ແລະ ການເຄື່ອນໄຫວວຽກງານຂອງຜູ້ສະໝັກຮັບເລືອກຕັ້ງ ແລ້ວໃຊ້ສິດພື້ນຖານຂອງຕົນ ເພື່ອເລືອກເອົາບຸກຄົນທີ່ມີມາດຕະຖານເງື່ອນໄຂຖືກຕ້ອງ ແລະ ຄົບຖ້ວນ ເຂົ້າເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນຢ່າງແທ້ຈິງ ແລະ ເພື່ອໃຫ້ຜູ້ສະໝັກຮັບເລືອກຕັ້ງ ໄດ້ຮັບຮູ້ກ່ຽວກັບຄວາມມຸ່ງມາດປາຖະໜາ ແລະ ສະພາບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າໃນເຂດເລືອກຕັ້ງຂອງຕົນ ທັງໄດ້ພົວພັນສະໜິດແໜ້ນກັບປະຊາຊົນຢູ່ໃນທ້ອງຖິ່ນທີ່ຕົນລົງສະໝັກຮັບເລືອກຕັ້ງ; ໃນລະຫວ່າງວັນທີ 9-10 ກຸມພານີ້, ທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງແຂວງຊຽງຂວາງ ໄດ້ນຳພາຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ຊຸດທີ X ລົງໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກຕັ້ງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງຊຽງຂວາງ ຢູ່ 3 ຈຸດຄື: ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ກອງພົນໃຫຍ່ 643, ກອງພົນໃຫຍ່702ແລະ ໂຮງໝໍບໍລິເວນ 101 ໂດຍການຕ້ອນຮັບຂອງທ່ານ ພົຈວ. ວັນທອງ ພົງສະຫວັນ ຄະນະປະຈຳພັກແຂວງ, ເລຂາຄະນະພັກ, ຫົວໜ້າການເມືອງກອງບັນຊາການທະຫານແຂວງ ເຊິ່ງມີຄະນະພັກ-ຄະນະບັນຊາ, ນາຍ ແລະ ພົນທະຫານ-ຕຳຫຼວດ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ ແລະ ໃນລະຫວ່າງວັນທີ 11-14 ກຸມພາ ຢູ່ກຸ່ມບ້ານຄັງພະນຽນ ແລະ ເທດສະບານເມືອງໜອງແຮດ; ບ້ານນາຍອງ, ບ້ານນາທອງໄຄ້ວຽງແລະເທດສະບານເມືອງຄຳ; ກຸ່ມຍອດງື່ມ ເມືອງແປກ; ໂຮງຮຽນເຫຼົ່າຮົບບ້ານແປນແລະເທດສະບານເມືອງພູກູດ ໂດຍການຕ້ອນຮັບຈາກບັນດາເລຂາຄະນະບໍລິຫານພັກກຸ່ມບ້ານ ແລະ ບ້ານ ເຊິ່ງມີຄະນະກຳມະການພັກເມືອງ, ຄະນະພັກ-ຄະນະບັນຊາ, ນາຍແລະພົນທະຫານ-ຕຳຫຼວດແລະຫ້ອງການອ້ອມຂ້າງ, ຄະນະພັກບ້ານ, ຄູ-ອາຈານ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ບັນດາທ່ານຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ໄດ້ຜັດປ່ຽນກັນສະເໜີຕົວ ນັບແຕ່ນ້ຳເບີ 1-10 ຕາມລຳດັບ ແລະ ເປີດໂອກາດໃຫ້ຜູ້ມີສິດເລືອກຕັ້ງ ມີຄຳຄິດຄຳເຫັນ ແລະ ຄຳສະເໜີຕ່າງໆ; ຈາກນັ້ນ, ຜູ້ສະໝັກຮັບເລືອກຕັ້ງ ກໍຮັບເອົາຄຳສະເໜີ ພ້ອມທັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ຈົ່ງພ້ອມກັນໄປໃຊ້ສິດຂອງຕົນໃນການເລືອກຕັ້ງໃນວັນອາທິດທີ 22 ກຸມພາທີ່ຈະມາເຖິງນີ້ ໃຫ້ບັນລຸຜົນສຳເລັດຕາມສີ່ລະດັບຄາດໝາຍໃນມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ຄື: 1) ນຳພາຜູ້ມີສິດເລືອກຕັ້ງ ໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, 2) ນຳພາຜູ້ມີສິດເລືອກຕັ້ງ ໃຫ້ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງ ຖືກຕ້ອງຕາມລະບຽບການເລືອກຕັ້ງ100%, 3) ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ 100% ແລະ 4) ນຳພາວຽກງານປ່ອນບັດເລືອກຕັ້ງໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ 100%.

ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ມີຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຈຳນວນ 10 ທ່ານ ຍິງ 3 ທ່ານ, ເລືອກເອົາ 7 ທ່ານ ເຊິ່ງເພດຍິງກວມເອົາ30%, ມາຈາກສູນກາງ 2 ທ່ານ, ມາຈາກແຂວງ 8 ທ່ານ ຍິງ 3 ທ່ານ ທີ່ເປັນຕົວແທນຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ; ທົ່ວແຂວງມີ 432 ໜ່ວຍປ່ອນບັດ, ມີຈຳນວນພົນລະເມືອງ 613,848 ຄົນ ຍິງ 170,177 ຄົນແລະຜູ້ມີສິດປ່ອນບັດເລືອກຕັ້ງ ມີ 172,780 ຄົນ ຍິງ 82,797 ຄົນ.

ເມືອງໜອງແຮດ ມີ 11 ກຸ່ມ, 105 ບ້ານ, 6,767 ຄອບຄົວ, ພົນລະເມືອງ43,138 ຄົນ ຍິງ20,292ຄົນ, ຜູ້ມີສິດເລືອກຕັ້ງ 26,609 ຄົນ ຍິງ 12,496 ຄົນ ແລະ ມີ 62 ໜ່ວຍປ່ອນບັດເລືອກຕັ້ງ; ເມືອງຄຳ ມີພົນລະເມືອງ 56,436 ຄົນ ຍິງ 27,017ຄົນ, ຜູ້ມີສິດເລືອກຕັ້ງ 29,410 ຄົນ ຍິງ 14,059 ຄົນ ແລະ ມີ 75 ໜ່ວຍປ່ອນບັດເລືອກຕັ້ງ; ເມືອງແປກ ມີພົນລະເມືອງ 105,380 ຄົນ ຍິງ 73,370ຄົນ, ຜູ້ມີສິດເລືອກຕັ້ງ 63,375 ຄົນ ຍິງ 30,329 ຄົນ ແລະ ມີ 114 ໜ່ວຍປ່ອນບັດເລືອກຕັ້ງ; ເມືອງພູກູດ ມີພົນລະເມືອງ 28,340 ຄົນ ຍິງ 13,917 ຄົນ, ຜູ້ມີສິດເລືອກຕັ້ງ 16,200 ຄົນ ຍິງ 7,950 ຄົນ ແລະ ມີ 26 ໜ່ວຍປ່ອນບັດເລືອກຕັ້ງ.

**(ນາງ ອາລິນ ສຸພົມມະປະດິດ)**



## ຜູ້ສະໝັກ...

(ຕໍ່ຈາກໜ້າ 1)

(ສພຊ) - ໃນລະຫວ່າງ ວັນທີ 10-13 ກຸມພາ, ທ່ານ ບຸນສອນ ເພັດລາວັນ ປະທານ ສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍຄະນະ ໄດ້ນຳພາຜູ້ຮັບ ສະໝັກເລືອກຕັ້ງເປັນສະມາຊິກ ສະພາແຫ່ງຊາດ(ສສຊ)ຈຳນວນ 5 ທ່ານ ຍິງ 2 ທ່ານ (ຈາກຜູ້ສະ ໝັກທັງໝົດ 14 ທ່ານ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ວຽງຈັນ ຊຸດທີ V ປະ ຈຳເຂດເລືອກຕັ້ງເມືອງວຽງຄຳ, ເມືອງໂພນໂຮງ ແລະ ເມືອງທຸ ລະຄົມ ໄດ້ລົງໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກ ຕັ້ງຢູ່ 3 ຈຸດຂອງເມືອງວຽງຄຳ ຄື: ກອງບັນຊາການທະຫານ ແຂວງ, ກອງບັນຊາການປ້ອງ ກັນຄວາມສະຫງົບ (ປກສ) ແຂວງແລະສຳນັກງານປົກຄອງ ເມືອງ; ຢູ່ເມືອງໂພນໂຮງ: ສະ ໂມສອນໃຫຍ່ຂອງເມືອງ, ກຸ່ມ ຈຸດສຸມພັດທະນາຫຼັກ 52 (ວັດ ບ້ານນາເລົາ), ວິທະຍາຄານກົມ ມະດຳ ແລະ ຢູ່ເມືອງທຸລະຄົມ: ກອງພັນໃຫຍ່497 ແລະ ສະໂມ ສອນໃຫຍ່ຂອງເມືອງ ເຊິ່ງມີຄະ ນະພັກ-ຄະນະບັນຊາ, ນາຍແລະ ພົນທະຫານ-ຕຳຫຼວດແລະຫ້ອງ ການອ້ອມຂ້າງເມືອງ ແລະ ເລ ຂາ-ຮອງເລຂາພັກບ້ານເຂົ້າຮ່ວມ ຮັບຟັງຢ່າງພ້ອມພຽງ.

ຈຸດປະສົງກໍເພື່ອຮັບປະ ກັນໃຫ້ແກ່ການໂຄສະນາຫາສຽງ ຂອງຜູ້ສະໝັກຮັບເລືອກຕັ້ງເປັນ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ຮັບຜົນດີ, ມີຄວາມເປັນເອ ກະພາບໃນທົ່ວແຂວງທັງຮັບປະ ກັນການນຳພາຂອງພັກ, ສອດ ຄ່ອງກັບລັດຖະທຳມະນູນ, ກົດ ໝາຍ ແລະ ສະພາບຄວາມເປັນ ຈິງຂອງແຂວງ; ເພື່ອສຶກສາອົບ ຮົມໃຫ້ຜູ້ມີສິດປ່ອນບັດເລືອກ ຕັ້ງ ຮັບຮູ້ ແລະ ເຂົ້າໃຈແຈ້ງຕື່ມ ກ່ຽວກັບຄວາມໝາຍຄວາມສຳ ຄັນຂອງການເລືອກຕັ້ງ ແນໃສ່ ເຊີດຊູລະດັບຄວາມຕື່ນຕົວທາງ ດ້ານການເມືອງຂອງປະຊາຊົນ ບັນດາເຜົ່າແລະຮັບປະກັນການ ປະຕິບັດສິດເປັນເຈົ້າຂອງປະເທດ ຊາດຂອງພົນລະເມືອງ ໃນການ ໄປໃຊ້ສິດປ່ອນບັດເລືອກຕັ້ງເອົາ ຜູ້ແທນ ຖືກຕ້ອງຕາມລະບຽບ ຫຼັກການ; ເຮັດໃຫ້ຜູ້ມີສິດເລືອກ ຕັ້ງ ໄດ້ຮູ້ໄດ້ເຫັນຜູ້ສະໝັກຮັບ ເລືອກຕັ້ງ ແລະ ກໍໄດ້ຊີວະປະ ຫວັດ, ຄຸນສົມບັດ, ຄວາມຮູ້ ຄວາມສາມາດ, ທັດສະນະ ແລະ ການເຄື່ອນໄຫວວຽກງານຂອງ ຜູ້ສະໝັກຮັບເລືອກຕັ້ງ ແລ້ວໃຊ້ ສິດພື້ນຖານຂອງຕົນເພື່ອເລືອກ ເອົາບຸກຄົນທີ່ມີມາດຕະຖານເງື່ອນ ໄຂຖືກຕ້ອງ ແລະ ຄົບຖ້ວນ ເຂົ້າ ເປັນຕົວແທນແຫ່ງສິດອຳນາດ ຂອງປະຊາຊົນຢ່າງແທ້ຈິງ; ເພື່ອ ໃຫ້ຜູ້ສະໝັກຮັບເລືອກຕັ້ງ ໄດ້ ຮັບຮູ້ກ່ຽວກັບຄວາມມຸ່ງມາດປາ ຖະໜາແລະສະພາບການດຳລົງ ຊີວິດຂອງປະຊາຊົນບັນດາເຜົ່າ ໃນເຂດເລືອກຕັ້ງຂອງຕົນ ແລະ ໄດ້ພົວພັນສະໜິດແໜ້ນກັບປະ ຊາຊົນຢູ່ໃນທ້ອງຖິ່ນທີ່ຕົນລົງສະ ໝັກຮັບເລືອກຕັ້ງ.

ໃນການໂຄສະນາຫາ ສຽງ, ຜູ້ຮັບສະໝັກຮັບເລືອກຕັ້ງ ໄດ້ຜັດປ່ຽນກັນສະເໜີຊື່ ແລະ ປະຫວັດການເຄື່ອນໄຫວຂອງ ຕົນໃນແຕ່ລະໄລຍະພ້ອມທັງຍົກ ໃຫ້ເຫັນຄວາມໝາຍຄວາມສຳ ຄັນ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສສຊ ແລະ ສສຂ ເພື່ອເປັນການສະໜອງຂໍ້ມູນ ຂ່າວສານຕົວຈິງ, ເປັນການແນະ ນຳໃຫ້ຜູ້ມີສິດເລືອກຕັ້ງ ຮັບຮູ້ ເຂົ້າໃຈຢ່າງຖືກຕ້ອງຕໍ່ຜູ້ສະໝັກ ຮັບເລືອກຕັ້ງແຕ່ລະທ່ານ ທັງ ເປັນບ່ອນອີງໃນການຄົ້ນຄວ້າ, ຄົ້ນຄິດ ສົມທຽບໃສ່ມາດຕະຖານ ເພື່ອຕັດສິນໃຈເລືອກເອົາຜູ້ທີ່ຕົນ ເຫັນວ່າມີມາດຕະຖານກວ່າໝູ່ ເພື່ອເປັນຕົວແທນຂອງຕົນໄປ ປະຕິບັດສິດ, ອຳນາດຂອງປະຊາ ຊົນບັນດາເຜົ່າຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ; ພ້ອມນັ້ນ, ຍັງຮຽກຮ້ອງໃຫ້ຜູ້ມີ ສິດເລືອກຕັ້ງ ຈົ່ງໄດ້ຮ່ວມຈິດ ຮ່ວມໃຈເຂົ້າຮ່ວມຂະບວນການ ເລືອກຕັ້ງຄັ້ງນີ້ ໃຫ້ກາຍເປັນປາງ ບຸນໃຫຍ່ຂອງຊາດ, ເລືອກໄດ້ ຜູ້ສະໝັກທີ່ມີມາດຕະຖານເງື່ອນ ໄຂຄົບຖ້ວນ, ມີຄວາມຮູ້ຄວາມ ສາມາດ, ມີວິໄສທັດທີ່ກວ້າງໄກ ເພື່ອມາເປັນຕົວແທນປະຊາຊົນ ເຂົ້າໄປຢູ່ໃນສະພາ. ພ້ອມດຽວ ກັນນັ້ນ, ຕາງໜ້າຄະນະ ຍັງໄດ້ ຜ່ານຊື່, ປະຫວັດ ແລະ ຂໍ້ມູນສຳ ຄັນຕ່າງໆ ຂອງຜູ້ສະໝັກທ່ານ ອື່ນ ທີ່ໄດ້ແບ່ງກຸ່ມລົງເຄື່ອນໄຫວ ໃນແຕ່ລະຈຸດ ເພື່ອຮັບປະກັນ ໃຫ້ຜູ້ມີສິດປ່ອນບັດເລືອກຕັ້ງ ໄດ້ຮັບຮູ້ຂໍ້ມູນຂອງຜູ້ສະໝັກຢ່າງ ຄົບຖ້ວນ ແລະ ໂປ່ງໃສ ກ່ອນ ການຕັດສິນໃຈປ່ອນບັດເລືອກຕັ້ງ.

ໂຄງປະກອບຂອງຜູ້ສະ ໝັກຮັບເລືອກຕັ້ງເປັນສສຊປະ ຈຳເຂດເລືອກຕັ້ງທີ 10 ແຂວງ ວຽງຈັນ ຊຸດທີ X ມີຈຳນວນ 14 ທ່ານ ຍິງ 5 ທ່ານ ເຊິ່ງເພດ ຍິງກວມເອົາ 35.7%; ມີຕົວ ແທນຈາກເຜົ່າລາວ 11 ທ່ານ, ເຜົ່າກຶມມຸ 1 ທ່ານ, ເຜົ່າມົ້ງ 2 ທ່ານ; ມາຈາກສູນກາງ 5 ທ່ານ ຍິງ 2 ທ່ານ, ມາຈາກແຂວງ 9 ທ່ານ ຍິງ 3 ທ່ານ ທີ່ເປັນຕົວ ແທນຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ; ອາຍຸກະ ສຽນລະຫວ່າງ 46-55 ປີ ກວມ ເອົາ 50%, 56-60 ປີ ກວມ ເອົາ 42.8%, 60 ປີຂຶ້ນໄປ ກວມເອົາ 7.1%; ມີຜູ້ສະໝັກ ໃໝ່ 11 ທ່ານ ຍິງ 4 ທ່ານ ແລະ ຜູ້ເກົ່າສືບຕໍ່ສະໝັກ 3 ທ່ານ ຍິງ 1 ທ່ານ. ທົ່ວແຂວງວຽງຈັນ ມີ 511 ໜ່ວຍປ່ອນບັດ, ມີຈຳ ນວນພົນລະເມືອງ 514,471 ຄົນ ຍິງ 246,764 ຄົນ ແລະ ຜູ້ມີສິດປ່ອນບັດເລືອກຕັ້ງ ມີ 277,228 ຄົນ ຍິງ 133,114 ຄົນ.

ຜູ້ສະໝັກຮັບເລືອກຕັ້ງ ເປັນ ສສຂ ປະຈຳເຂດເລືອກຕັ້ງ ເມືອງວຽງຄຳມີຈຳນວນ7ທ່ານ ຍິງ 1 ທ່ານ; ມີຕົວແທນຈາກ ເຜົ່າລາວ 5 ທ່ານ, ເຜົ່າກຶມມຸ 1 ທ່ານ ແລະ ເຜົ່າພວນ 1 ທ່ານ; ສຳລັບໜ່ວຍປ່ອນບັດໃນກອງ ບັນຊາການທະຫານແຂວງ ມີ 1 ໜ່ວຍ, ຜູ້ມີສິດປ່ອນບັດເລືອກ ຕັ້ງ 699 ຄົນ ຍິງ 183 ຄົນ; ໜ່ວຍປ່ອນບັດໃນກອງບັນຊາ ການ ປກສ ແຂວງ ມີ 2 ໜ່ວຍ, ຜູ້ມີສິດປ່ອນບັດເລືອກຕັ້ງ 1,159 ຄົນ ຍິງ 218 ຄົນ ແລະ ມີຜູ້ຖືກຫາ, ຜູ້ຖືກຕັດສ້າງ 1,294 ຄົນ ຍິງ 39 ຄົນ; ທົ່ວ ເມືອງວຽງຄຳມີຜູ້ມີສິດປ່ອນບັດ ເລືອກຕັ້ງ 14,435 ຄົນ ຍິງ 6,563 ຄົນ, ມີ 25 ໜ່ວຍປ່ອນ ບັດເລືອກຕັ້ງ.

ຜູ້ສະໝັກຮັບເລືອກຕັ້ງ ເປັນ ສສຂ ປະຈຳເຂດເລືອກຕັ້ງ ເມືອງໂພນໂຮງ ມີຈຳນວນ 7 ທ່ານ ຍິງ 2 ທ່ານ, ມີຕົວແທນ ຈາກເຜົ່າລາວ 5 ທ່ານ ຍິງ 1 ທ່ານ, ເຜົ່າກຶມມຸ 1 ທ່ານ ແລະ ເຜົ່າມົ້ງ 1 ທ່ານ; ໃນນັ້ນ, ເລືອກ ເອົາ5ທ່ານ. ຜູ້ສະໝັກຮັບເລືອກ ຕັ້ງເປັນ ສສຂ ປະຈຳເຂດເລືອກ ຕັ້ງເມືອງທຸລະຄົມ ມີຈຳນວນ 7 ທ່ານ ຍິງ 1 ທ່ານ, ມີຕົວແທນ ຈາກເຜົ່າລາວ 7 ທ່ານ ຍິງ 1 ທ່ານ; ໃນນັ້ນ, ເລືອກເອົາ5ທ່ານ.

ທົ່ວເມືອງໂພນໂຮງ ມີ 68 ໜ່ວຍປ່ອນບັດເລືອກຕັ້ງ ແລະ 12 ຖົງໜ່ວຍເຄື່ອນທີ່ ເຊິ່ງ ມີຈຳນວນຜູ້ມີສິດປ່ອນບັດເລືອກ ຕັ້ງ 45,854 ຄົນ ຍິງ 21,874 ຄົນ; ສຳລັບເມືອງທຸລະຄົມ ມີ 65 ໜ່ວຍປ່ອນບັດເລືອກຕັ້ງ, ຜູ້ມີສິດປ່ອນບັດເລືອກຕັ້ງ 35,153 ຄົນ ຍິງ 16,623 ຄົນ ທີ່ຈະໄດ້ໃຊ້ສິດຂອງຕົນປ່ອນບັດ ເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໃນວັນທີ 22 ກຸມພາທີ່ຈະມາເຖິງນີ້.

**(ນາງ ສຸພາວັນ ທອມສະນິດ)**

## ທົ່ວປະເທດ...

(ຕໍ່ຈາກໜ້າ 1)

ຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024 ແລະ ອີງຕາມຜົນການ ສຳຫຼວດ, ເກັບກຳສະຖິຕິຜູ້ມີສິດ ເລືອກຕັ້ງໃນແຕ່ລະເຂດເລືອກ ຕັ້ງທົ່ວປະເທດ, ຄະນະກຳມະ ການເລືອກຕັ້ງລະດັບຊາດ ໄດ້ ອອກມະຕິສະບັບເລກທີ 90/ຄລຊ, ລົງວັນທີ 10 ກຸມພາ 2026 ວ່າດ້ວຍການປະກາດຈຳ ນວນຜູ້ມີສິດເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດ ທີ V ຢ່າງເປັນທາງການ ເຊິ່ງມະ ຕິມີບາງເນື້ອໃນສຳຄັນດັ່ງນີ້: ຜູ້ ມີສິດເລືອກຕັ້ງສະມາຊິກສະພາ ແຫ່ງຊາດ ຊຸດທີ X ແລະ ສະພາ ປະຊາຊົນຂັ້ນແຂວງ ຊຸດທີ V ໃນທົ່ວປະເທດ ມີຈຳນວນລວມ ທັງໝົດ 4,764,384 ຄົນ, ຍິງ 2,384,104 ຄົນ ໃນນີ້, ຜູ້ມີ ສິດເລືອກຕັ້ງຢູ່ຕ່າງປະເທດ ທີ່ ສາມາດໃຊ້ສິດປ່ອນບັດເລືອກ ຕັ້ງຕົວຈິງ ມີຈຳນວນ 23,378 ຄົນ, ຍິງ 7,828 ຄົນ; ຈຳນວນ ຜູ້ມີສິດເລືອກຕັ້ງໃນແຕ່ລະເຂດ ເລືອກຕັ້ງ ມີລາຍລະອຽດດັ່ງນີ້:

- ເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ມີ 679,952 ຄົນ, ຍິງ 339,824 ຄົນ ໃນນີ້, ລວມທັງຜູ້ມີສິດປ່ອນບັດເລືອກ ຕັ້ງຢູ່ຕ່າງປະເທດ;
- ເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ມີ 124,060 ຄົນ, ຍິງ 65,053 ຄົນ;
- ເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ ມີ 136,346 ຄົນ, ຍິງ 66,770 ຄົນ;
- ເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ມີ 228,192 ຄົນ, ຍິງ 111,024 ຄົນ;
- ເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ມີ 132,290 ຄົນ, ຍິງ 65,277 ຄົນ;
- ເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ມີ 299,857 ຄົນ, ຍິງ 148,550 ຄົນ;
- ເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ມີ 302,711 ຄົນ, ຍິງ 145,856 ຄົນ;
- ເຂດເລືອກຕັ້ງທີ 8 ແຂວງຫົວພັນ ມີ 177,694 ຄົນ, ຍິງ 79,794 ຄົນ;
- ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ມີ 174,419 ຄົນ, ຍິງ 83,104 ຄົນ;
- ເຂດເລືອກຕັ້ງທີ 10 ແຂວງວຽງຈັນ ມີ 302,420 ຄົນ, ຍິງ 145,862 ຄົນ;
- ເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ມີ 215,335 ຄົນ, ຍິງ 106,373 ຄົນ;
- ເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ມີ 296,137 ຄົນ, ຍິງ 149,036 ຄົນ;
- ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ມີ 723,129 ຄົນ, ຍິງ 367,702 ຄົນ;
- ເຂດເລືອກຕັ້ງທີ 14 ແຂວງສາລະວັນ ມີ 256,796 ຄົນ, ຍິງ 152,832 ຄົນ;
- ເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ມີ 457,302 ຄົນ, ຍິງ 231,696 ຄົນ;
- ເຂດເລືອກຕັ້ງທີ 16 ແຂວງເຊກອງ ມີ 87,503 ຄົນ, ຍິງ 42,160 ຄົນ;
- ເຂດເລືອກຕັ້ງທີ 17 ແຂວງອັດຕະປື ມີ 111,878 ຄົນ, ຍິງ 54,708 ຄົນ;
- ເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ມີ 58,363 ຄົນ, ຍິງ 28,483 ຄົນ.

ວັນທີ 22 ກຸມພາ 2026 ແມ່ນເຫດການປະຫວັດສາດທີ່ ມີຄວາມໝາຍສຳຄັນທີ່ສຸດໃນ ຊີວິດການເມືອງຂອງປະຊາຊົນ ລາວບັນດາເຜົ່າທົ່ວທັງຊາດ ລວມ ທັງພົນລະເມືອງລາວທີ່ດຳລົງຊີ ວິດ ແລະ ປະຕິບັດໜ້າທີ່ວຽກ ງານຢູ່ຕ່າງປະເທດ, ເປັນຂີດໝາຍ ສຳຄັນຍິ່ງອີກຄັ້ງໜຶ່ງໃນການເສີມ ຂະຫຍາຍ ແລະ ປະຕິບັດສິດປະ ຊາທິປະໄຕຂອງປະຊາຊົນລາວ ບັນດາເຜົ່າ ໃນຖານະຜູ້ເປັນເຈົ້າ ຂອງອຳນາດລັດຂອງ ສາທາລະ ນະລັດ ປະຊາທິປະໄຕ ປະຊາຊົນ ລາວ.

ໃນນາມຕາງໜ້າຄະນະ ກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງ ລະດັບທ້ອງຖິ່ນທຸກຂັ້ນ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຖືເອົາໂອກາດນີ້ຮຽກຮ້ອງໄປຍັງ ພົນລະເມືອງລາວຜູ້ມີສິດເລືອກ ຕັ້ງທຸກຄົນ ແຕ່ອາຍຸ 18 ປີຂຶ້ນ ໄປ ຈົ່ງພ້ອມກັນໄປໃຊ້ສິດໃນ ວັນເລືອກຕັ້ງໃຫ້ຄົບຖ້ວນ, ເຮັດ ໃຫ້ການເລືອກຕັ້ງຄັ້ງນີ້ ບັນລຸຈຸດ ປະສົງ ແລະ ລະດັບຄາດໝາຍທີ່ ວາງໄວ້ ແນໃສ່ປັບປຸງ ແລະ ຍົກ ສູງບົດບາດຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນ ຂັ້ນແຂວງ ຊຸດທີ V ສູ່ບາດລ້ຽວ ໃໝ່, ປະກອບສ່ວນທີ່ສຳຄັນໃນ ການສ້າງລັດປະຊາທິປະໄຕປະ ຊາຊົນຂອງພວກເຮົາ ໃຫ້ເປັນ ລັດທີ່ປົກຄອງດ້ວຍກົດໝາຍ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ພາປະເທດ ຊາດທີ່ແສນຮັກແລະຫວງແຫນ ຂອງພວກເຮົາ ກໍຄືຊາດລາວເອ ກະພາບ ກ້າວໄປສູ່ໄລຍະການ ພັດທະນາດ້ວຍຄຸນນະພາບໃໝ່ ຕາມມະຕິຂອງກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແລະ ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງລັດ 5 ປີ ຄັ້ງທີ X ແຕ່ປີ 2026-2030 ໃຫ້ປາ ກົດຜົນເປັນຈິງ, ສືບຕໍ່ບູລະນະ ລະບອບປະຊາທິປະໄຕປະຊາຊົນ ຢູ່ປະເທດເຮົາ ກ້າວຂຶ້ນສູ່ສັງຄົມ ນິຍົມຢ່າງໜັກແໜ້ນ.

# ສພຂ ຫົວພັນ ເຜີຍແຜ່ເຊື່ອມຊຶມ ເອກະສານວຽກງານເລືອກຕັ້ງ



(ສພຂ) - ວັນທີ 6 ມັງກອນຜ່ານມາ, ກອງປະຊຸມເຜີຍແຜ່ເຊື່ອມຊຶມແລະຜັນຂະຫຍາຍວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ທີ່ຫໍວັດທະນະທຳແຂວງຫົວພັນ ໃຫ້ແກ່ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນຢູ່ເທດສະບານແຂວງ; ໂດຍການເປັນປະທານ ຂອງທ່ານ ສີຄຳ ບຸນມີໄຊ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ປະທານຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ, ຮອງຫົວໜ້າ ອະນຸກຳມະການໂຄສະນະ ແລະ ປຸກລະດົມຂະບວນການ ມີຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າສອງກອງບັນຊາການ ຕະຫຼອດຮອດພະນັກງານລັດຖະກອນແລະແຂກຖືກເຊີນເຂົ້າຮ່ວມ.

ການເຜີຍແຜ່ຄັ້ງນີ້ແມ່ນເພື່ອເຮັດໃຫ້ການກະກຽມແລະດຳເນີນການເລືອກຕັ້ງສສຊຊຸດທີ X ແລະ ສສຂ ຊຸດທີ V ຖືກຕ້ອງຕາມເນື້ອໃນມະຕິຂອງກົມການເມືອງສູນກາງພັກກ່ຽວກັບການເລືອກຕັ້ງສສຊແລະສສຂ, ສອດຄ່ອງຕາມກົດໝາຍກຳນົດໄວ້; ເປັນການເຊື່ອມຊຶມບັນດາເອກະສານກ່ຽວກັບການເລືອກຕັ້ງ, ແນະນຳການກະກຽມ ແລະ ດຳເນີນການເລືອກຕັ້ງໃຫ້ຖືກຕ້ອງຕາມກົດໝາຍ ແລະ ມີຄວາມເປັນເອກະພາບ ແຕ່ຂັ້ນແຂວງ ແລະ ຂັ້ນເມືອງ; ເພື່ອສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມການເສີມຂະຫຍາຍຈິດໃຈຮັກຊາດ ສິດປະຊາທິປະໄຕໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງຊາດ, ມີສະຕິລະວັງຕົວ, ເປັນເຈົ້າການຕອບຕ້ານກົນອຸບາຍ ແລະ ການທຳລາຍຂອງພວກອິດທິກຳລັງປໍລະປັກ ທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາ.

ກອງປະຊຸມໄດ້ຮັບຟັງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ ຂອງກົມການເມືອງສູນກາງພັກວ່າດ້ວຍ ການເພີ່ມທະວີການນຳພາ-ຊີ້ນຳ ຂອງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V; ເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍ ການເລືອກຕັ້ງ ສສຊ ແລະ ສສຂ; ເພີ່ມທະວີການນຳພາແນວຄິດ ແລະ ເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ; ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຂົ້າໃຈເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດໃນບັ້ນເລືອກຕັ້ງຄັ້ງນີ້.

# ຊຸກຍູ້ການກະກຽມວຽກງານເລືອກຕັ້ງ ສສຊ ແລະ ສສຂ

(ສພຂ) - ວັນທີ6-7 ມັງກອນຜ່ານມາຄະນະກຳມະການເລືອກຕັ້ງຂັ້ນແຂວງ ໂດຍສະເພາະແມ່ນອະນຸກຳມະການເລຂານຸການ ແລະ ອະນຸກຳມະການໂຄງປະກອບ ແລະ ບຸກຄາລາກອນ ລົງຊຸກຍູ້ການກະກຽມວຽກເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ(ສສຂ) ຊຸດທີ V ຢູ່ເມືອງໜອງແຮດ, ເມືອງຄຳ, ເມືອງ ພູກູດ ແລະ ເມືອງແປກ ນຳພາໂດຍ ທ່ານ ວຽງໄຊສີວິໄລຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຫົວໜ້າອະນຸກຳມະການເລຂານຸຂັ້ນແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີປະທານຄະນະກຳມະການເລືອກຕັ້ງຂັ້ນເມືອງ, ມີອະນຸກຳມະການເລຂານຸການຂັ້ນແຂວງ, ອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນຂັ້ນແຂວງ ແລະ ຄະນະກຳມະການເລືອກຕັ້ງຂັ້ນເມືອງເຂົ້າຮ່ວມ.



ກອງປະຊຸມ ທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຫົວໜ້າອະນຸກຳມະການເລຂານຸການຂັ້ນແຂວງໄດ້ແນະນຳແລະເນັ້ນໜັກໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເອົາໃຈໃສ່ຕໍ່ວຽກງານການກະກຽມວຽກເລືອກຕັ້ງ ແລະ ສະເໜີໃຫ້ເມືອງ ເຊື່ອມຊຶມເອກະສານເລືອກຕັ້ງໃຫ້ທັນຕາມກຳນົດເວລາ; ພ້ອມດຽວກັນນັ້ນກອງປະຊຸມ ໄດ້ຮັບຟັງການລາຍງານຂອງຄະນະກຳມະການເລືອກຕັ້ງຂັ້ນເມືອງ ກ່ຽວກັບການກະກຽມຄວາມພ້ອມກ່ຽວກັບວຽກເລືອກຕັ້ງ ໃນນັ້ນກອງປະຊຸມຍັງໄດ້ຮັບຟັງຄຳຄິດຄຳເຫັນ ຂອງບັນດາທ່ານ ແລະ ປຶກສາຫາລື ວຽກງານການກະກຽມວຽກເລືອກຕັ້ງ, ກອງປະຊຸມ ສະເໜີໃຫ້ເມືອງຈົ່ງຮີບຮ້ອນສັງລວມຂໍ້ມູນໜ່ວຍປ່ອນບັດ, ຜູ້ມີສິດເລືອກຕັ້ງ, ຈຸດລົງໂຄສະນາຫາສຽງ, ກາຈ້ຳ, ທຸງ, ຖົງເຄື່ອນທີ່ ພ້ອມນີ້ໃຫ້ເມືອງຄັດເລືອກເປົ້າໝາຍຜູ້ທີ່ຈະລົງຮັບສະໝັກເລືອກຕັ້ງເມືອງໜຶ່ງໃຫ້ຄັດເລືອກເປົ້າໝາຍ 4 ທ່ານ ບໍ່ນັບເລຂາພັກເມືອງ, ເປົ້າໝາຍຈາກແຂວງ ຄັດເລືອກປະກອບໃສ່ເມືອງໆລະ 3 ທ່ານ ນັບທັງເລຂາພັກເມືອງ ລວມທັງໝົດເມືອງ1 ມີຜູ້ລົງຮັບສະໝັກເລືອກຕັ້ງ 7 ທ່ານ ເພື່ອຄັດເລືອກເອົາເປັນສະມາຊິກສະພາປະຊາຊົນແຂວງ 5 ທ່ານ ຜູ້ທີ່ລົງຮັບສະໝັກເລືອກຕັ້ງ ໃຫ້ເມືອງຄັດເລືອກເອົາຜູ້ທີ່ມີຜົນງານດີເດັ່ນ ພ້ອມທັງຂື້ນແຜນງົບປະມານ, ອຸປະກອນຮັບໃຊ້ໃນບັ້ນເລືອກຕັ້ງ, ເອົາໃຈໃສ່ນຳພາ-ຊີ້ນຳແລະເຊີດຊູເສີມຂະຫຍາຍເນື້ອໃນກອງປະຊຸມ; ເຊື່ອມຊຶມເອກະສານ ເພື່ອຮັບປະກັນໃຫ້ແກ່ບັ້ນເລືອກຕັ້ງມີຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ນັ້ນ ຕ້ອງຮັບປະກັນໃຫ້ໄດ້ ສີ່ຮ້ອຍສ່ວນຮ້ອຍ ຄື: ຕ້ອງຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງ ມາປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ100%; ຕ້ອງຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງ ຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງຖືກຕ້ອງຕາມລະບຽບການ ເລືອກຕັ້ງ 100%; ຕ້ອງຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພໃນວັນເລືອກຕັ້ງ 100%; ຕ້ອງຮັບປະກັນການປ່ອນບັດເລືອກຕັ້ງໃຫ້ມີຄວາມໂປ່ງໃສ ແລະ ສຳເລັດຕາມກຳນົດເວລາ 100%.

**(ນາງ ສຸກສະຫວັນ ອິນທະແສງ)**

# ຄະນະກຳມະການເລືອກຕັ້ງແຂວງໄຊຍະບູລີ ສະຫຼຸບຖອດຖອນບົດຮຽນວຽກງານເລືອກຕັ້ງ




(ສພຂ) - ວັນທີ 2 ມັງກອນຜ່ານມາ ທີ່ສະໂມສອນຫ້ອງວ່າການແຂວງສະຫວັນນະເຂດ, ໄດ້ມີກອງປະຊຸມເຜີຍແຜ່ ແລະ ເຊື່ອມຊຶມ ບັນດາເອກະສານການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຊຸດທີ V ໃຫ້ແກ່ພະນັກງານຫຼັກແຫຼ່ງຂອງແຂວງ ພາຍໃຕ້ການເປັນປະທານຂອງທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານພັກແຂວງສະຫວັນນະເຂດ, ປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ; ເຂົ້າຮ່ວມມີທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ, ຮອງປະທານຜູ້ປະຈຳການຄະນະກຳມະການເລືອກຕັ້ງຂັ້ນແຂວງ; ທ່ານນາງ ດາວວອນ ໄຊສຸລຽນ ຮອງເລຂາຄະນະບໍລິຫານພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ ພ້ອມດ້ວຍຄະນະພັກ-ຄະນະນຳຂອງແຂວງ, ຄະນະກຳມະການປົກຄອງນະຄອນ ແລະ ຄະນະກຳມະການປົກຄອງເມືອງ ເຂົ້າຮ່ວມ.

ທ່ານ ບຸນໂຈມ ອຸບົນປະເສີດ ກ່າວວ່າ: ກອງປະຊຸມຄັ້ງນີ້ເພື່ອເຜີຍແຜ່ບັນດາເອກະສານເລືອກຕັ້ງໃຫ້ແກ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຄະນະກຳມະການເລືອກຕັ້ງຂັ້ນເມືອງ, ບັນດາທ່ານຫົວຫນ້າພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ລັດວິສາຫະກິດ, ທະນາຄານ ແລະ ບັນດາອະນຸກຳມະການທີ່ຮັບຜິດຊອບວຽກງານເລືອກຕັ້ງ ທັງເປັນການຮັບປະກັນໃຫ້ແກ່ບັ້ນເລືອກຕັ້ງ ໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້ນັ້ນ; ພ້ອມນັ້ນທ່ານຍັງໄດ້ເນັ້ນໜັກໃຫ້ທຸກພາກສ່ວນຕ້ອງພ້ອມກັນເອົາໃຈໃສ່ສູ້ຊົນ ແລະ ຮ່ວມແຮງຮ່ວມໃຈກັນຈັດຕັ້ງປະຕິບັດບັນດາໜ້າວຽກທີ່ສຳຄັນຄື: ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງໄປປ່ອນບັດເລືອກຕັ້ງໃຫ້ຄົບຖ້ວນ 100%, ຮັບປະກັນໃຫ້ຜູ້ມີສິດເລືອກຕັ້ງຮູ້ໃຊ້ສິດໃນການປ່ອນບັດເລືອກຕັ້ງຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມສະຫງົບ ແລະ ມີຄວາມປອດໄພ ໃນວັນເລືອກຕັ້ງ 100%, ຮັບປະກັນການປ່ອນບັດເລືອກຕັ້ງ ໃຫ້ມີຄວາມໂປ່ງໃສແລະສຳເລັດຕາມກຳນົດເວລາ 100%;

ກອງປະຊຸມໄດ້ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳ ຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V ແລະເອກະສານເພີ່ມທະວີການນຳພາແນວຄິດ, ເສີມຂະຫຍາຍສິດປະຊາທິປະໄຕ ຂອງປະຊາຊົນບັນດາເຜົ່າເພື່ອການເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V; ຄຳແນະນຳຂອງຄະນະກຳມະການລະດັບຊາດ ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ແກ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V; ແຜນການດຳເນີນງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອການເລືອກຕັ້ງ ສສຊ ຊຸດທີ X ແລະສພຂ ຊຸດທີ V, ຜ່ານຄຳແນະນຳຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບການປ່ອນບັດ, ການນັບຄະແນນ ແລະ ການປະກາດຜົນການເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີ V: ຈາກນັ້ນ, ໄດ້ພ້ອມກັນປຶກສາຫາລື, ຄົ້ນຄ້ວາ, ປະກອບຄຳຄິດເຫັນ ແລະ ແລກປ່ຽນບົດຮຽນດ້ວຍຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ວຽກງານເລືອກຕັ້ງ ທີ່ພົວພັນກັບຂົງເຂດວຽກງານທີ່ຕົນເອງຮັບຜິດຊອບໃຫ້ເຂົ້າໃຈຢ່າງຈະແຈ້ງ, ເລິກເຊິ່ງ, ສາມາດນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.






# ພາສີສັງຄົມ

# ແນວລາວ

ມື້ກ່ອນ ມີການໂສເລ້ກັນເລື່ອງຄູບາອອກຄລິບສຽງເລື່ອງເງິນທານ ເຊິ່ງເປັນກະແສທົ່ວສັງຄົມ... ມີຜູ້ຕັ້ງບັນຫາເລື່ອງລາຍຈ່າຍຕ່າງໆ ເອີ້ນວ່າພາສີສັງຄົມ ເຊັ່ນວ່າ: ຊອງບຸນ, ງານດອງ ເຫຼົ່ານີ້ເປັນຕົ້ນ ຖືເປັນລາຍຈ່າຍທີ່ປະຕິເສດຍາກ ແລະ ມັນກໍກວມປະລິມານລາຍຈ່າຍສູງສົມຄວນ ຖ້າທຽບໃສ່ການໃຊ້ຈ່າຍອື່ນໆຂອງຄອບຄົວ.

ໃນວົງສົນທະນາເວົ້າເຖິງການຈຳແນກ ແລະ ໃຫ້ເຜດານ ເວລາໃສ່ຊອງບຸນ, ງານດອງ ວ່າຄວນໃຫ້ເໝາະສົມກັບລາຍຮັບຂອງເຮົາ ເຖິງແມ່ນວ່າມັນອາດເປັນທີ່ບໍ່ພໍໃຈຂອງເຈົ້າພາບກໍຕາມວ່າຊັ້ນ!.

ສຳລັບພະນັກງານບຳນານ ພວກເພິ່ນວ່າເພດານຄວນຢູ່ໃນຂອບເຂດສອງແສນກີບຕໍ່ຊອງ. ຂອບເຂດນີ້ ມາເບິ່ງຕົວຈິງກໍໜັກ ເພາະບາງເທື່ອເດືອນໜຶ່ງມີ 5 ຊອງບຸນ, 6 ຊອງດອງ ກໍເປັນເຄິ່ງໜຶ່ງຂອງເງິນເດືອນບຳນານແລ້ວ; ບາດນີ້ເງິນຊື້ຢາກິນສຳລັບປົວພະຍາດບອກໃສ່ ກໍພໍດີໝົດ, ແລ້ວເຂົ້ານ້ຳ-ອາຫານ ຊິກິນແນວໃດ? ຄັນແມ່ນຄອບຄົວເພິ່ນອ່າວມີລາຍຮັບດີແດ່, ລູກເຕົ້າພໍອາໄສ ກໍຖືວ່າລອດໄປ. ຖ້າຄອງຖ້າແຕ່ເງິນບຳນານຢ່າງດຽວ ກໍຖືວ່າລຳບາກ, ຈັບໜ້າຫວິດຫຼັງຊິໄປຫາລາຍຮັບອື່ນຈາກການເພີ່ມພູນຜະລິດຜົນ ກໍບໍ່ມີເຫື່ອແຮງແລ້ວ.

ຜູ້ທີ່ເຄີຍເຮັດວຽກງານໂຄສະນາ-ສື່ມວນຊົນ ຫາກວ່າຍັງແຂງແຮງ, ສະໝອງປອດໂປ່ງແກ່ຂຽນບົດໃຫ້ສື່ຕ່າງໆ ເພິ່ນໃຫ້ຄ່າຂຽນ 1 ແສນກີບ ກໍຖືວ່າຄ່າແຮງງານສູງແລ້ວວ່າຊັ້ນ! ກໍບໍ່ຮູ້ວ່າພວກຂຽນປຶ້ມກະຊິຄືກັນບໍ?

ຢູ່ບ້ານເຮົານີ້ຕ້ອງຍອມຮັບ ຜູ້ເຮັດວຽກງານດ້ານຂີດຂຽນ-ໃຊ້ສະໝອງນີ້ມີລາຍຮັບຕ່ຳຖ້າທຽບໃສ່ວິຊາອາຊີບອື່ນບໍ! ຂຽນປະຫວັດອີງກອນ, ບຸກຄົນ ເພິ່ນກໍບໍ່ຈ້າງແພງພໍປານໃດ ຖ້າທຽບໃສ່ແຮງງານອື່ນ ໂດຍສະເພາະແມ່ນປະເທດໃກ້ຄຽງ ຫຼື ປະເທດເພື່ອນມິດຍຸດທະສາດນໍ.

ຫັນມາເວົ້າເລື່ອງພາສີສັງຄົມນີ້ຢາກໃຫ້ເຈົ້າພາບເຂົ້າໃຈຄຳວ່າສັດທານໍຄັນແມ່ນເຮັດບຸນ,ສ່ວນວ່າງານດອງນັ້ນ ກໍໃຫ້ຖືວ່າຕາມຄວາມສາມາດສານໍ! ເຫັນໜ້າເຫັນຕາກັນ, ພົບປະສັງສັນ ໃຫ້ຖືເປັນເລື່ອງໃຫຍ່ສາ!ເງິນຊອງບໍ່ວ່າກັບຜູ້ມີລາຍຮັບອ່າວດີແດ່ກໍໃສ່ຫຼາຍ, ຜູ້ມີລາຍຮັບປານກາງ ກໍໄດ້ທຳມະດາສາມັນນີ້ລະນໍ!.

ຕັ້ງບັນຫານີ້ຂຶ້ນ ບໍ່ແມ່ນເປັນການສຽດສີກັນເນີ! ພຽງແຕ່ຢາກສ່ອງແສງໃຫ້ເຂົ້າໃຈນຳກັນເວລາປະສົບພົບພໍ້ນໍ? ເຮັດບຸນ, ເຮັດງານດອງ ໃຫ້ຖືວ່າເປີເຊັນຫຼຸບທຶນສູງ, ຢູ່ທຶນ ກໍຖືວ່າສຸດຍອດແລ້ວ!.

ຂໍສະເໜີແລກປ່ຽນນຳ, ເພື່ອນຜູ້ອ່ານທ່ານໃດ ເຫັນເປັນປະການໃດ? ສ່ອງແສງເຂົ້າມາເນີ! ເພື່ອຊ່ວຍກັນສ້າງມາດຕະຖານນໍ ໃຫ້ພໍດີພໍງາມ.

# ເຜີຍແຜ່ບັນດາເອກະສານ ເພື່ອດຳເນີນການເລືອກຕັ້ງ ສສຊ ແລະ ສສຂ



(ສພຂ) - ວັນທີ 8-12 ມັງກອນຜ່ານມາ ອະນຸກຳມະການໂຄສະນາ, ປຸກລະດົມຂະບວນການຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ລົງເຄື່ອນໄຫວເຜີຍແຜ່ບັນດາເອກະສານຕ່າງໆກ່ຽວກັບການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ຢູ່ 5 ເມືອງຄື: ເມືອງອາດສະພອນ; ເມືອງອຸທຸມພອນ; ເມືອງໄຊບູລີ; ເມືອງພະລານໄຊ ແລະ ເມືອງອາດສະພັງທອງ ເຊິ່ງນຳພາໂດຍທ່ານ ຄຳປານ ເຄນວົງສັກ ສສຊ ທັງເປັນຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຂອງສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ.ໃຫ້ການຕ້ອນຮັບ ແລະ ເຂົ້າຮ່ວມຟັງມີບັນດາທ່ານເລຂາ-ຮອງເລຂາພັກເມືອງ, ຄະນະປະຈຳພັກເມືອງ; ກຳມະການພັກເມືອງ; ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ;ປກຊ-ປກສ; ຫົວໜ້າຫ້ອງການອ້ອມຂ້າງເມືອງ ພ້ອມດ້ວຍບັນທ່ານໃນອະນຸກຳມະການດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ແລະ ພາກສ່ວນທີ່ກ່ຽວຂ້ອງຂອງທັງ 5ເມືອງ ເຂົ້າຮ່ວມທັງໝົດ 1,236 ທ່ານ, ຍິງ 569 ທ່ານ.

ຈຸດປະສົງການເຄື່ອນໄຫວໃນຄັ້ງນີ້, ກໍເພື່ອເຮັດໃຫ້ທຸກພາກສ່ວນໄດ້ເຂົ້າໃຈ ແລະ ຮັບຮູ້ຄວາມໝາຍຄວາມສຳຄັນຂອງການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ແລະ ທາງອະນຸກຳມະການກໍ່ໄດ້ເນັ້ນໜັກວ່າ: ໃຫ້ຖືເອົາການເລືອກຕັ້ງໃນຄັ້ງນີ້ປຽບເໝືອນປາງບຸນໃຫຍ່ລະດັບຊາດ ພ້ອມທັງຮັບປະກັນໃຫ້ໄດ້ ໃນສີ່ລະດັບຄາດໝາຍຄື: ນຳພາຜູ້ມີສິດເລືອກຕັ້ງໄປປ່ອນບັດເລືອກຕັ້ງໃຫ້ໄດ້ 100%,ນຳພາຜູ້ມີສິດເລືອກຕັ້ງໃຫ້ຮູ້ໃຊ້ສິດເລືອກຕັ້ງໃຫ້ຖືກຕ້ອງຕາມລະບຽບການເລືອກຕັ້ງ 100%, ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ມີຄວາມສະຫງົບແລະປອດໄພ 100% ແລະ ນຳພາວຽກງານປ່ອນບັດເລືອກຕັ້ງໃຫ້ຮັບປະກັນຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ100% ແລະ ໃນທີ່ປະຊຸມບັນດາທ່ານຄະນະກຳມະການເລືອກຕັ້ງຂັ້ນແຂວງກໍ່ຍັງໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ບັນດາເອກະສານຕ່າງໆພ້ອມສົນທະນາແລກປ່ຽນກັນດັ່ງນີ້: ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ12 ກັນຍາ 2025 ກ່ຽວກັບການເພີ້ມທະວີການນຳພາ-ຊີ້ນຳ ຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V, ເພີ້ມທະວີການນຳພາແນວຄິດ, ເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າເພື່ອການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V, ກຳແໜ້ນເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ດຳເນີນຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບສະພາບຕົວຈິງ ຂອງແຕ່ລະທ້ອງຖິ່ນ ແລະ ມີປະສິດທິຜົນ, ຄຳແນະນຳຂອງຄະນະກຳມະການລະດັບຊາດ ກ່ຽວກັບການເພີ້ມທະວີການນຳພາ-ຊີ້ນຳວຽກງານປ້ອງກັນຊາດ-ປ້ອງກນັຄວາມສະຫງົບ ໃຫ້ແກ່ການເລືອກຕັ້ງສສຊຊຸດທີ X ແລະ ສສຂ ຊຸດທີ V, ແຜນການດຳເນີນງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງເພື່ອການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V, ເອກະສານຄຳແນະນຳຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ກ່ຽວກັບການປ່ອນບັດ, ການນັບຄະແນນ ແລະ ການປະກາດຜົນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V, ຊຶ່ງການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ຄາດວ່າຈະຈັດຂຶ້ນພ້ອມກັນທົ່ວປະເທດໃນຄັ້ງວັນທີ22 ກຸມພາ 2026 ທີ່ຈະມາເຖິງນີ້.

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10



(ສພຂ)-ວັນທີ6-7 ມັງກອນຜ່ານມາ, ທ່ານ ຄຳຜັນ ຄູນສະຫວັນ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ພົອ ຄູນສະໄໝ ລິນສັນຍາ ສະມາຊິກສະພາແຫ່ງຊາດ(ສສຊ) ປະຈຳເຂດເລືອກຕັ້ງທີ 13 ພ້ອມຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ IV ຢູ່ 3 ຈຸດ ຂອງເມືອງສອງຄອນ ຄື: ສະໂມສອນເມືອງສອງຄອນ, ກຸ່ມບ້ານທີ 10 ຈຸດສຸມຊະແຍກ ແລະ ກຸ່ມບ້ານທີ 8 ເຊບັ້ງຫຽງ; ໂດຍການເຂົ້າຮ່ວມຂອງທ່ານ ສີລີ ບົວພັນ ປະທານຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງສອງຄອນ; ທ່ານຮອງເລຂາຄະນະບໍລິຫານພັກເມືອງສອງຄອນພ້ອມດ້ວຍຄະນະປະຈຳພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ກຳລັງ ປກຊ-ປກສ, ພະນັກງານ-ລັດຖະກອນ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນເມືອງສອງຄອນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວໄດ້ຮັບຟັງ ການລາຍງານການຈັດຕັ້ງປະຕິບັດວຽກງານການນຳພາຊີ້ນຳວຽກງານ ຂອງອຳນາດການປົກຄອງບ້ານ; ຈາກນັ້ນ, ບັນດາທ່ານ ສສຊ, ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ IV ໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ຕໍ່ກັບພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຕົກລົງບັນຫາສຳຄັນຕ່າງໆ ແລະ ຜົນງານທີ່ຍາດມາໄດ້ໃນໄລປະຕິບັດໜ້າທີ່ ຂອງ ສສຊ ແລະ ສສຂ ຜ່ານມາ ທັງເປັນການລົງພົບປະຜູ້ມີສິດເລືອກຕັ້ງເພື່ອເກັບກຳຄຳຄິດຄຳເຫັນ ຕໍ່ວຽກງານການຄຸ້ມຄອງບໍລິຫານລັດຕື່ມອີກ; ຈາກນັ້ນ, ໄດ້ເປີດໂອກາດໃຫ້ການນຳ ຂອງເມືອງ, ການຈັດຕັ້ງຂັ້ນບ້ານ ກໍຄື ພໍ່ແມ່ປະຊາຊົນໃນແຕ່ລະກຸ່ມບ້ານ ສະເໜີຄຳຄິດຄຳເຫັນ ເຊິ່ງບັນຫາສ່ວນຫຼາຍ ຕິດພັນກັບການພັດທະນາພື້ນຖານໂຄງລ່າງ, ການແກ້ໄຂບັນຫາຢາເສບຕິດ ແລະ ການສຶກສາໄລຍະຜ່ານມາ ເຊິ່ງບັນດາທ່ານ ສສຊ ແລະ ສສຂ ໄດ້ຕອບບາງຄຳຊັກຖາມ ຂອງພໍ່ແມ່ປະຊາຊົນ ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງບັນຫາຕ່າງໆ; ບາງບັນຫາທີ່ຕິດພັນກັບຫຼາຍພາກສ່ວນ ແມ່ນຈະໄດ້ນຳສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອນຳໄປປຶກສາຫາລືແລະຄົ້ນຄວ້າແກ້ໄຂໃນຂັ້ນຕອນຕໍ່ໄປ.

ນອກນີ້, ສສຊ ແລະ ສສຂ ຍັງຮຽກຮ້ອງມາຍັງຜູ້ມີສິດເລືອກຕັ້ງ ກໍຄື ພໍ່ແມ່ປະຊາຊົນ ຜູ້ທີ່ມີອາຍຸ 18 ປີ ຂຶ້ນໄປ ຈົ່ງພ້ອມພາກັນນຳໃຊ້ສິດເລືອກຕັ້ງເອົາ ສສຊ ແລະ ສສຂ ໃນວັນທີ 22 ກຸມພາ 2026 ທີ່ຈະມາເຖິງນີ້ ພ້ອມນັ້ນຍັງໄດ້ນຳເອົາອຸປະກອນການສຶກສາຈຳນວນໜຶ່ງມອບໃຫ້ກຸ່ມບ້ານທີ່ 10 ຈຸດສຸມຊະແຍກ ເພື່ອນຳໄປແຈກຢາຍໃຫ້ກັບປະຊາຊົນໄດ້ນຳໃຊ້ຢ່າງທົ່ວເຖິງກັນ.





## ສຸຂະພາບທາຍໂຣຄ

# ປັດໃຈທີ່ກໍ່ໃຫ້ເກີດອາການໄມເກຣນ

# ຮຽບຮຽງໂດຍ: ດອກຄາຍ




ໄມເກຣນແມ່ນອາການເຈັບຫົວຕຸບໆເປັນບາດ ທີ່ຂ້ອນຂ້າງຮຸນແຮງ ໂດຍເລີ່ມຈາກບໍລິເວນໃກ້ດວງຕາ (ບໍລິເວນຄິ້ວ) ຫຼື ຂະໝັບຂ້າງໃດຂ້າງໜຶ່ງ ແລະ ມັກເກີດຂຶ້ນຊໍ້າໆ, ບາງຄັ້ງອາດຈະເປັນດົນເຖິງ 3 ມື້ ຈົນຜູ້ທີ່ເຈັບຮູ້ສຶກວ່າທໍລະມານ ແລະ ບໍ່ສາມາດເຮັດຫຍັງໄດ້ ເຊິ່ງເຮົາກໍຮູ້ດີຢູ່ແລ້ວວ່າບໍ່ສາມາດຮັກສາໃຫ້ຫາຍຂາດໄດ້ ວິທີທີ່ດີທີ່ສຸດຄື ການຄົ້ນຫາວ່າປັດໄຈໃດທີ່ກະຕຸ້ນເຮັດໃຫ້ເກີດອາການ ແລ້ວຫຼີກລ່ຽງ

ປັດໄຈກະຕຸ້ນໃຫ້ເກີດໄມເກຣນມີທັງປັດໄຈພາຍໃນ ແລະປັດໃຈພາຍນອກຂອງຮ່າງກາຍທີ່ຄວນລະມັດລະວັງດັ່ງຕໍ່ໄປນີ້:

- ອາຫານທີ່ມີສານກະຕຸ້ນໃຫ້ເກີດອາການຂອງໄມເກຣນ: ສານ nitrite ເຊິ່ງພົບໃນ ເບຄອນ, ຮອດດ໋ອກ ແລະ ຊີ້ນໝັກ. ໄທຣາມີນພົບໃນວາຍແດງ, ຕັບໄກ່, ອາຫານທີ່ໃຊ້ຢີສ. ແທນນິນພົບຫຼາຍໃນຖົ່ວເປືອກແຂງ, ນໍ້າແອັບເປີ້ນ, ໝາກອະງຸ່ນ, ເບີຣີ້, ຊາ, ກາເຟ ແລະ ວາຍແດງ. ຊັບໄຟລ ທີ່ໃຊ້ໃນການໝັກວາຍ ແລະ ປະສົມໝາກໄມ້ແຫ້ງ. ໂມໂນໂຊດຽມກຣູຕາເມດ ຫຼື ແປ້ງນົວ. ນອກຈາກນັ້ນແລ້ວ, ກໍຍັງມີຊ໋ອກໂກແລັດ, ເນຍແຂງ, ອາຫານທອດແລະໝາກໄມ້ຈຳພວກລຶດສົ້ມ (ແຕ່ໃນທີ່ນີ້ກໍບໍ່ໄດ້ໝາຍຄວາມວ່າຜູ້ທີ່ເປັນໄມເກຣນຫ້າມບໍລິໂພກອາຫານຈຳພວກນີ້ ພຽງແຕ່ຫຼຸດຜ່ອນລົງ ເພື່ອບໍ່ໃຫ້ໄປກະຕຸ້ນຕໍ່ການເກີດອາການປວດໄມເກຣນ).

- ນໍ້າຕານໃນເລືອດຕໍ່າ: ເນື່ອງຈາກຫິວ ຫຼື ກິນອາຫານທີ່ມີຄາໂບໄຮເດດຂັດຂາວຫຼາຍເກີນໄປ.

- ຢູ່ໃນພາວະຂາດນໍ້າ.

- ຄວາມຕຶງຄຽດ ແລະ ຄວາມກະວົນກະວາຍ.

- ນອນຫຼັບຫຼືພັກຜ່ອນບໍ່ພຽງພໍ.

- ຢູ່ໃນບ່ອນທີ່ມີແສງແຈ້ງ ຫຼື ໄດ້ຮັບແສງແຈ້ງຈົນເກີນໄປ.

- ຢູ່ໃນສະຖານທີ່ໆມີສຽງດັງເກີນໄປ.

- ການປ່ຽນແປງສະພາບອາກາດ ຫຼື ລະດູການ ອາກາດແຫ້ງ ຫຼື ລົມຮ້ອນ.

- ການປ່ຽນແປງລະດັບຮໍໂມນ ອາດເນື່ອງມາຈາກການປ່ຽນແປງພາຍໃນຮ່າງກາຍ ຫຼື ການກິນຢາຄຸມ.

ຫາກສາມາດຫຼີກລ່ຽງປັດໄຈດັ່ງກ່າວແລ້ວແຕ່ຍັງມີອາການຢູ່ສາມາດເລືອກວິທີບຳບັດດ້ວຍຕົວເອງໄດ້ຫຼາຍວິທີດັ່ງນີ້:

ອາຫານຕ້ານໄມເກຣນ: ເນື່ອງຈາກລະບົບຍ່ອຍແລະດູດຊຶມ Magnesium ຂອງຜູ້ທີ່ເປັນໄມເກຣນມັກມີປະສິດທິພາບທີ່ບໍ່ຄ່ອຍດີ ຊ່ວງກ່ອນມີອາການ ຫຼື ກຳລັງມີອາການປວດໄມເກຣນຈຶ່ງມັກມີປະລິມານ Magnesium ຫຼຸດຕໍ່າລົງ. ອາຫານທີ່ມີ Magnesium ຈຶ່ງຊ່ວຍໃຫ້ຄວາມຖີ່ ແລະ ຄວາມຮຸນແຮງຂອງອາການຫຼຸດຜ່ອນລົງໄດ້ ເຊິ່ງອາຫານທີ່ມີ Magnesium ໄດ້ແກ່: ຜັກໃບຂຽວ, ໝາກຖົ່ວ(ຍົກເວັ້ນໝາກຖົ່ວເປືອກແຂງ ເຖິງຈະມີ Magnesium ສູງ ແຕ່ກໍມີສານແທນນິນທີ່ກະຕຸ້ນໃຫ້ເກີດໄມເກຣນ) ແລະ ໝາກອື.

ນອກຈາກ Magnesium ແລ້ວຜູ້ມີອາການໄມເກຣນເຊິ່ງມີພະລັງງານສຳຮອງໃນສະໝອງຂ້ອນຂ້າງຕໍ່າ ຈຶ່ງຕ້ອງການ Riboflavin ຫຼື ວິຕາມິນບີ 2 ເພື່ອຊ່ວຍເພີ່ມພະລັງງານສຳຮອງໃນເຊວສະໝອງ. ອາຫານທີ່ມີ Riboflavin ສູງໄດ້ແກ່: ເຫັດຫອມສົດ ແລະ ຜັກຫວານ.

**ຂໍ້ມູນຈາກ:**
**www.laopost.com**

---

## ອາດກະວີລາວ

# ສະພາ ຊຸດທີ X

**ເນື່ອງໃນໂອກາດເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ຄັ້ງວັນທີ 22 ກຸມພາ 2026**

**# ກົງໃຈ ແສງອຳພັນ**

❊ ທີຊາວສອງມໍ່ໃກ້ — ຈວນຈອບມາເຖິງ
ເດືອນກຸມພາປັກໝາຍ — ຂີດຈຸດຈົດແຕ້ມ
ປີສອງພັນຊາວຫົກໃຫ້ — ເປັນບຸນປາງໃຫຍ່
ໄປໃຊ້ສິດເລືອກຕັ້ງ — ຕົວແທນເຂົ້ານັ່ງສະພາ

❊ ເຊີນບັນດາພີ່ນ້ອງ — ຕອງໄຕ່ເອົາຕົວແທນ
ເລືອກເອົາ ສສຊ — ພໍ່າ ສສຂ ເຂົ້າ
ນັ່ງສະພາຕາງເວົ້າ — ແທນເຮົາໃນທຸກເລື່ອງ
ທັງການເມືອງເສດຖະກິດປາກທ້ອງ — ຍໍມ້ວນມອບໝາຍ

❊ ເລືອກຕາມໃຈພີ່ນ້ອງ — ແນເນັ່ງພໍພະໄທ
ຢ່າໃຫ້ມີບັດຕາຍ — ເສື່ອມສູນສິດໃຊ້
ມັກທ່ານໃດຮັກສາໄວ້ — ແພງເອົາຖະໜອມຍົກ
ຄັນບໍ່ມັກຂີດຂ້າ — ຕັດແຕ້ມອອກແຕ່ເກມ

❊ ເລືອກເຂົ້າເຟມນັ່ງເວົ້າ — ແທນເຮົາຢູ່ໃນສະພາ
ເປັນເວລາຫຼາຍປີ — ເລືອກໃຫ້ດີພໍໃຈແລ້ວ
ຈຶ່ງຈິ່ງນາມເອົາໄວ້ — ແຍງໄປຈົນກວ່າ
ຈະເລືອກຕັ້ງຮອບໜ້າ — ຫ້າປີພຸ້ນຈຶ່ງປ່ຽນຄືນ ໄດ້ເດີ!

❊ ເຊີນເດີ! ເຊີນທ່ານມາເລືອກຕັ້ງ — ມືວນັ່ງນອນເສີຍ ບໍ່ເປັນດາຍ!
ມາໃຊ້ສິດຂອງຕົນ — ເລືອກຄົນມາດຖານພ້ອມ
ເລືອກເພື່ອໄປແທນເວົ້າ — ຕາງເຮົາມີອຳນາດ
ວຽກສຳຄັນຮອບຮູ້ — ປົກປ້ອງໄພ່ປະຊາ ຊອບແລ້ວ!

---



## ຫົກຫາຍ ລະບາຍ

**(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)**

**# ສຽມທ້ຽນ**

❊ **ຂໍມເຊີຍ** ບັນດາທ່ານຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງທົ່ວປະເທດ ເປັນເຫດການຄຶກຄື້ນ ຂະບວນໃຫຍ່ບ່າສະເໜີ ໃຫ້ປະຊາເຫັນແຈ້ງ ແຍງໂສມທັງຄວາມຮູ້ ປະຫວັດເຄື່ອນໄຫວກ່າວ ເອົາຜົນງານຍອດອ້າງ ແນວທາງປະສົງສ້າງສູ່ປະຊາ **ຄັກເດ!** ເລືອກເອົາເບີເພີ່ນຜູ້ ຕາມໃຈດັ່ງປະສົງ ຮູບໂສມທັງຜົນງານ ຄູ່ຄຽງຄວາມຮູ້ ມາບົ່ງຢູ່ສະພາເວົ້າ ແທນຕົນທຸກເລື່ອງ ເພື່ອປັບປ່ຽນແກ້ ເມືອງບ້ານໃຫ້ຮຸ່ງເຮືອງ **ເລືອກເອົາເດີ!**

❊ **ອັບ** ເວລາປ່ຽນແປງໄປຕາມລະດູການ ຈາກລະດູໜາວກ້າວສູ່ຕົ້ນລະດູແລ້ງ ກະສິກອນຫຼາຍເຂດແຂວງກະກຽມໃຫ້ການຜະລິດລະດູໃໝ່ ທັງເອົາໃຈໃສ່ກຽມຄວາມພ້ອມ ຕາມກອນຜະຫຍາເພີ່ນວ່າເອົ້າ **"ຟ້າບໍ່ຂ້າມເດືອນສາມ ບໍ່ຮາມເດືອນສີ່ ເອັ້ນແຕ່ຢີ່ກັບຈຽງ" ນັ້ນແລ້ວ!**

---

## 🤗 ຊອບຍິ້ມ 🤗

**# ພົ້ງລຶ່ງ**

### ເລື່ອງ: ກໍ່ນັ້ນຫັ້ນແຫຼະ

ທິດເຈີດມີອາການປ່ວຍຢ່າງໜັກ, ຫຼັງຈາກທີ່ພັກຮັກສາຢູ່ໂຮງໝໍມາໄດ້ໜຶ່ງເດືອນ, ທ່ານໝໍຈຶ່ງໄດ້ມາແຈ້ງ

**ທ່ານໝໍ:** ເຈົ້າສາມາດກັບໄປຫາຍາດພີ່ນ້ອງເຈົ້າໄດ້ແລ້ວ...

**ທິດເຈີດ:** ເອົາທ່ານໝໍ!!! ພີ່ນ້ອງຂ້ອຍຕາຍໝົດລະໄດ໋

**ທ່ານໝໍ:** ກໍ່ນັ້ນຫັ້ນແຫຼະ...!!!!



## ສຸພາສິດ-ຄະຕິເຕືອນໃຈ

**# ດອກຫຍ້າ**

ຈະຕົກຕ່ຳ ດົບຄ່ຳ ຢ່າທໍ້ຖອຍ
ຈະອ່ອນແອ ເມື່ອຍລ້າ ຢ່າສິ້ນຫວັງ
ເຖິງມື້ນີ້ ແຮງຖອຍ ດ້ອຍກຳລັງ
ຊີວິດຍັງ ຄົງຢູ່ ສູ້ຕໍ່ໄປ

ລັດຖະສະພາຕ່າງປະເທດ

# Armenia ກຳນົດວັນທີ 7 ມິຖຸນາ ເລືອກຕັ້ງສະມາຊິກສະພາ

(Xinhua) - ປະທານາທິບໍດີ ວາຮັກນ໌ ຄາຊາຕູຣ໌ຢານ (Vahagn Khachaturyan) ແຫ່ງ ສາທາລະນະລັດອາກເມນີ ໄດ້ລົງນາມໃນລັດຖະດຳລັດເມື່ອວັນສຸກທີ 6 ກຸມພາ 2026 ໂດຍກຳນົດວັນທີ 7 ມິຖຸນາປີນີ້ ເປັນວັນເລືອກຕັ້ງສະມາຊິກສະພາແຫ່ງຊາດ.

ລັດຖະດຳລັດດັ່ງກ່າວ ກ່ຽວຂ້ອງກັບການປະກາດການເລືອກຕັ້ງປົກກະຕິຢ່າງເປັນທາງການສຳລັບສະພາແຫ່ງຊາດ ເຊິ່ງເປັນສະພານິຕິບັນຍັດທີ່ມີສະພາດຽວຂອງອາກເມນີ, ອີງຕາມເອກະສານທີ່ເຜີຍແຜ່ໃນເວັບໄຊທາງການຂອງປະທານາທິບໍດີ.

ນາຍົກລັດຖະມົນຕີຂອງອາກເມນີໄດ້ຮັບການເລືອກຕັ້ງໂດຍສຽງສ່ວນຫຼາຍໃນສະພາແຫ່ງຊາດແລະໄດ້ຮັບການແຕ່ງຕັ້ງຢ່າງເປັນທາງການໂດຍປະທານາທິບໍດີ. ນາຍົກລັດຖະມົນຕີຄົນປັດຈຸບັນນິໂຄລປາຊິນຢານ (Nikol Pashinyan) ດຳລົງຕຳແໜ່ງຕັ້ງແຕ່ປີ 2018.



# ສານສູງສຸດລັດເຊຍ ຕັດສິນວ່າພາບທີ່ສ້າງຂຶ້ນ ໂດຍ AI ໃນການຫາສຽງເລືອກຕັ້ງ ຜິດກົດໝາຍ

(Xinhua) - ວັນທີ 5 ກຸມພາຜ່ານມາ, ສານສູງສຸດຂອງລັດເຊຍ ໄດ້ກ່າວວ່າ ການນຳໃຊ້ຮູບພາບບຸກຄົນທີ່ສ້າງຂຶ້ນໂດຍປັນຍາປະດິດ ຫຼື ເອໄອ (artificial intelligence - AI) ໃນການໂຄສະນາຫາສຽງເລືອກຕັ້ງນັ້ນແມ່ນລະເມີດຕໍ່ກົດໝາຍການເລືອກຕັ້ງຂອງລັດເຊຍ.

ຄຳຕັດສິນດັ່ງກ່າວປະກາດວ່າ ໃບປິວ (leaflet) ທີ່ຜະລິດໂດຍພັກກອມມູນິດແຫ່ງສະຫະພັນລັດເຊຍ ເປັນສິ່ງຜິດກົດໝາຍ ເນື່ອງຈາກວ່າມີການນຳໃຊ້ຮູບພາບບຸກຄົນທີ່ໜ້າຕາດີທີ່ສ້າງຂຶ້ນໂດຍ AI ໃນສື່ໂຄສະນາຫາສຽງ ເພື່ອກະຕຸ້ນໃຫ້ຜູ້ມີສິດເລືອກຕັ້ງ ສະໜັບສະໜູນລາຍຊື່ຜູ້ສະໝັກຂອງພັກ.

ສານກ່າວວ່າ ພາຍໃຕ້ກົດໝາຍຂອງລັດຖະບານກາງ, ມີພຽງແຕ່ຮູບພາບຂອງຜູ້ສະໝັກທີ່ໄດ້ຮັບການສະເໜີຊື່ໂດຍສະມາຄົມການເລືອກຕັ້ງເທົ່ານັ້ນທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ໃນສື່ໂຄສະນາຫາສຽງ ໂດຍລະບຸວ່າລະບຽບການພິເສດນີ້ ມີຈຸດປະສົງເພື່ອປ້ອງກັນບໍ່ໃຫ້ຜູ້ມີສິດເລືອກຕັ້ງ ມີຄວາມຮັບຮູ້ທີ່ບິດເບືອນກ່ຽວກັບຜູ້ສະໝັກ.

# ສະພາແຫ່ງຊາດ Venezuela ອະນຸມັດຮ່າງກົດໝາຍການອະໄພຍະໂທດ



(Xinhua) - ວັນທີ 5 ກຸມພາຜ່ານມາ, ສະພາແຫ່ງຊາດເວເນຊູເອລາ ໄດ້ອະນຸມັດຮ່າງກົດໝາຍການອະໄພຍະໂທດ ເພື່ອການຢູ່ຮ່ວມກັນແບບປະຊາທິປະໄຕ ຢ່າງເປັນເອກະສັນໃນວາລະທຳອິດ, ໂດຍມີຈຸດປະສົງເພື່ອວາງພື້ນຖານໃຫ້ແກ່ການປອງດອງແຫ່ງຊາດ.

"ຄຳເວົ້າສາມາດປິ່ນປົວໄດ້, ແຕ່ກໍສາມາດທຳຮ້າຍໄດ້ເຊັ່ນກັນ; ຂໍໃຫ້ພວກເຮົາຢືນຢັນໃນຖ້ອຍຄຳແຫ່ງການປິ່ນປົວ" ປະທານສະພາແຫ່ງຊາດ ຮໍຣ໌ເກ ໂຣດຣິເກຊ(JorgeRodriguez) ກ່າວໃນລະຫວ່າງກອງປະຊຸມ ພ້ອມທັງຮຽກຮ້ອງໃຫ້ສະມາຊິກຝ່າຍຄ້ານ "ຈົ່ງກ້າຫານຕໍ່ໄປ" ເຖິງວ່າຈະມີການໂຄສະນາຕໍ່ຕ້ານການປອງດອງທີ່ອາດຈະເກີດຂຶ້ນ.

ຮໍຣ໌ເກ ອາເຣອາຊາ (Jorge Arreaza) ສະມາຊິກສະພາແຫ່ງຊາດຈາກພັກສະຫະພັນສັງຄົມນິຍົມແຫ່ງເວເນຊູເອລາ, ຜູ້ສະເໜີຮ່າງກົດໝາຍສະບັບນີ້ ເອີ້ນມັນວ່າເປັນ "ພັນທະທາງຈັນຍາບັນ" ໃນການປິ່ນປົວບາດແຜ, ສົ່ງເສີມການເຈລະຈາ ແລະ ສ້າງຄວາມໄວ້ເນື້ອເຊື່ອໃຈຄືນໃໝ່ເພື່ອຜົນປະໂຫຍດຂອງປະຊາຊົນຊາວເວເນຊູເອລາ.

ຫຼຸຍສ໌ ໂຣເມໂຣ (Luis Romero) ສະມາຊິກສະພາແຫ່ງຊາດຈາກພັກກ້າວໜ້າຝ່າຍຄ້ານ ກ່າວວ່າ ກົດໝາຍດັ່ງກ່າວເປັນ "ໂອກາດທີ່ດີເລີດ" ສຳລັບການປອງດອງຊາດ, ໂດຍສະເພາະຫຼັງຈາກການໂຈມຕີຂອງສະຫະລັດອາເມລິກາເມື່ອວັນທີ 3 ມັງກອນ ແລະ ສະແດງຄວາມຍ້ອງຍໍນາງເດລຊີ ໂຣດຣິເກຊ (Delcy Rodriguez) ປະທານາທິບໍດີຮັກສາການ ທີ່ລິເລີ່ມການອະພິປາຍໃນເລື່ອງນີ້ ວ່າເປັນບາດກ້າວທີ່ກ້າຫານ.

ກົດໝາຍ 29 ມາດຕານີ້ ສ້າງຕັ້ງຄະນະກຳມະການພິເສດທີ່ມີຫຼາຍຝ່າຍເພື່ອການປອງດອງເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ.

ການອະໄພຍະໂທດຈະບໍ່ກວມເອົາອາຊະຍາກຳ ເຊັ່ນ: ອາຊະຍາກຳສົງຄາມ, ອາຊະຍາກຳຕໍ່ມະນຸດຊາດ, ການລະເມີດສິດທິມະນຸດຢ່າງຮ້າຍແຮງ, ການຄາດຕະກຳ, ການຄ້າຂາຍຢາເສບຕິດ, ຫຼື ການຍັກຍອກເງິນກອງທຶນສາທາລະນະ.

# ສະພານິຕິບັນຍັດສູງສຸດຂອງຈີນ ຈະຈັດກອງປະຊຸມຄະນະປະຈຳໃນທ້າຍເດືອນນີ້



(Xinhua) - ກອງປະຊຸມຄັ້ງທີ 21 ຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ຈະຈັດຂຶ້ນໃນວັນທີ25-26ກຸມພາ 2026, ການຕັດສິນໃຈນີ້ໄດ້ມີຂຶ້ນເມື່ອວັນອັງຄານທີ 10 ກຸມພາຜ່ານມາ ໃນລະຫວ່າງກອງປະຊຸມຄະນະປະທານຄະນະປະຈຳ ໂດຍການເປັນປະທານຂອງ ຈ້າວ ເລີ້ຈີ້ ປະທານຄະນະປະຈຳ NPC.

ຕາມວາລະກອງປະຊຸມທີ່ສະເໜີແລະ ໄດ້ມີການປຶກສາຫາລື, ສະມາຊິກສະພານິຕິບັນຍັດໃນກອງປະຊຸມທີ່ຈະມາເຖິງຈະພິຈາລະນາບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ຮ່າງວາລະກອງປະຊຸມສະໄໝສາມັນເທື່ອທີ 4 (ປະຈຳປີ) ຂອງ NPC ຊຸດທີ XIV, ຮ່າງລາຍຊື່ຜູ້ທີ່ໄດ້ຮັບການພິຈາລະນາໃຫ້ດຳລົງຕຳແໜ່ງປະທານ ແລະ ບົດບາດຂອງເລຂາທິການໃຫຍ່, ຮ່າງລາຍຊື່ຜູ້ແທນທີ່ບໍ່ມີສິດອອກສຽງ, ແລະ ບົດລາຍງານອື່ນໆ. ວາລະກອງປະຊຸມທີ່ສະເໜີເຜີຍໃຫ້ເຫັນວ່າ ຮ່າງກົດໝາຍວ່າດ້ວຍນັກບັນຊີສາທາລະນະທີ່ໄດ້ຮັບການຢັ້ງຢືນ ສະບັບປັບປຸງ ແລະ ຮ່າງກົດໝາຍວ່າດ້ວຍພະນັກງານດັບເພີງ ແລະ ກູ້ໄພ ຈະຖືກນຳສະເໜີຕໍ່ກອງປະຊຸມເປັນຄັ້ງທຳອິດ; ນອກຈາກນັ້ນ, ຈະພິຈາລະນາຮ່າງກົດໝາຍວ່າດ້ວຍການຊ່ວຍເຫຼືອທາງສັງຄົມອີກດ້ວຍ.

ໃນກອງປະຊຸມເມື່ອວັນອັງຄານ, ຍັງມີການພິຈາລະນາບົດລາຍງານກ່ຽວກັບການແກ້ໄຂຄຳຮ້ອງທຸກຂອງປະຊາຊົນໂດຍອົງການຂອງ NPC ໃນປີ 2025 ແລະ ຮ່າງມາດຕະການເພື່ອປັບປຸງກົນໄກການບັງຄັບໃຊ້ກົດໝາຍວ່າດ້ວຍການຕິດຕາມກວດກາໂດຍຄະນະປະຈຳສະພາຜູ້ແທນປະຊາຊົນທຸກຂັ້ນໃຫ້ດີຍິ່ງຂຶ້ນ.

# ຜົນການເລືອກຕັ້ງຍີ່ປຸ່ນ: ພັກລັດຖະບານ ໄດ້ຮັບສຽງສ່ວນຫຼາຍ 315 ທີ່ນັ່ງ




(AFP, Xinhua) - ວັນທີ 10 ກຸມພາ 2025 ຄະນະກຳມະການເລືອກຕັ້ງຍີ່ປຸ່ນ ໄດ້ປະກາດຜົນຢ່າງເປັນທາງການຂອງການເລືອກຕັ້ງທົ່ວໄປທີ່ຈັດຂຶ້ນເມື່ອວັນອາທິດທີ 8 ກຸມພາຜ່ານມາ ວ່າພັກເສລີປະຊາທິປະໄຕ (Liberal Democratic Party - LDP) ຂອງນາຍົກລັດຖະມົນຕີ ຊານາເອະ ທາຄາອິຈິ (Sanae Takaichi) ນາຍົກລັດຖະມົນຕີຍິງຄົນທຳອິດຂອງປະເທດ ໄດ້ຮັບໄຊຊະນະຫຼາຍທີ່ສຸດ 315 ຈາກທັງໝົດ 465 ທີ່ນັ່ງ ໃນສະພາຜູ້ແທນລາດສະດອນ (ສະພາຕ່ຳ), ຕາມມາດ້ວຍພັນທະມິດປະຕິຮູບສາຍກາງ (Centrist Reform Alliance) ເຊິ່ງເປັນພັກຝ່າຍຄ້ານຂອງອະດີດນາຍົກລັດຖະມົນຕີ ໂຢຊິຮິໂກະ ໂນດະ (Yoshihiko Noda) ໄດ້ຮັບ 48 ທີ່ນັ່ງ ແລະ ພັກນະວັດຕະກຳຍີ່ປຸ່ນ (Japan Innovation Party - JIP) ໄດ້ຮັບ 36 ທີ່ນັ່ງ, ສ່ວນພັກຊັນເຊໂຕະ (Sanseito) ເຊິ່ງເປັນພັກການເມືອງຝ່າຍຂວາຈັດ ໄດ້ຮັບ 15 ເພີ່ມຂຶ້ນຫຼາຍເຖິງ 12 ທີ່ນັ່ງ ຈາກການເລືອກຕັ້ງຄັ້ງຫຼ້າສຸດໃນປີ 2024; ຂະນະທີ່ຈຳນວນຜູ້ອອກມາໃຊ້ສິດແມ່ນ 54.34% ສຳລັບການເລືອກຕັ້ງແບບແບ່ງເຂດ ແລະ 55.12% ສຳລັບການເລືອກຕັ້ງແບບສັດສ່ວນເຊິ່ງຜູ້ທີ່ອອກມາລົງຄະແນນສຽງທັງສອງລະບົບເພີ່ມຂຶ້ນເລັກນ້ອຍຈາກການເລືອກຕັ້ງເມື່ອສອງປີກ່ອນ.

ມີນັກການເມືອງເພດຍິງທີ່ໄດ້ຮັບເລືອກຕັ້ງເຂົ້າສູ່ສະພາຜູ້ແທນລາດສະດອນ 68 ຄົນເທົ່ານັ້ນ ຄິດເປັນສັດສ່ວນພຽງ 15% ແລະ ຫຼຸດລົງຈາກການທີ່ມີນັກການເມືອງເພດຍິງໄດ້ຮັບເລືອກຕັ້ງ 73 ຄົນ ໃນການເລືອກຕັ້ງໃນປີ 2024, ສະຖິຕິດັ່ງກ່າວ ສວນທາງກັບການທີ່ການເລືອກຕັ້ງຄັ້ງນີ້ມີຜູ້ສະໝັກເພດຍິງສູງເປັນປະຫວັດສາດ 313 ຄົນ ເຊິ່ງຄິດເປັນ 24% ຂອງຜູ້ສະໝັກທັງໝົດ ແຕ່ເພີ່ມຂຶ້ນຈາກປີ 2024 ພຽງ 1%. ເຖິງແມ່ນວ່ານາຍົກລັດຖະມົນຕີ ທາຄາອິຈິ ສ້າງປະຫວັດສາດເປັນຜູ້ນຳຍິງຄົນທຳອິດຂອງປະເທດ; ຢ່າງໃດກໍຕາມ, ໃນການເຂົ້າຮັບຕຳແໜ່ງຢ່າງເປັນທາງການເມື່ອເດືອນຕຸລາປີຜ່ານມາ, ນາງແຕ່ງຕັ້ງຄະນະລັດຖະມົນຕີທີ່ມີຜູ້ຊາຍເປັນສ່ວນໃຫຍ່ ທັ້ງທີ່ເຄີຍໃຫ້ສັນຍາວ່າຈະເພີ່ມສັດ ສ່ວນແມ່ຍິງ. ຂະນະດຽວກັນ, ທາຄາອິຈິ ຍັງຄັດຄ້ານການປັບປຸງກົດໝາຍຂອງຍີ່ປຸ່ນ ເຊິ່ງໃຊ້ມາຕັ້ງແຕ່ສະໄໝສະຕະວັດທີ 19 ທີ່ກຳນົດໃຫ້ຄູ່ສົມລົດຕ້ອງໃຊ້ນາມສະກຸນດຽວກັນ; ດ້ານຜູ້ຊ່ຽວຊານຫຼາຍຄົນຊີ້ວ່າ ຜູ້ນຳຍິງຍີ່ປຸ່ນຄົນປັດຈຸບັນ ມີຈຸດຢືນຊະນິດທີ່ເອີ້ນວ່າ "ອະນຸລັກນິຍົມຢ່າງຍິ່ງ" ຈຶ່ງບໍ່ໜ້າຈະທຸ້ມເທ ຫຼື ໃຫ້ຄວາມສົນໃຈກັບການປະຕິຮູບນະໂຍບາຍດ້ານຄວາມຫຼາກຫຼາຍ, ຄວາມສະເໝີພາບ ແລະ ການຢູ່ຮ່ວມກັນ ຫຼື ດີອີໄອ (Diversity, equity, and inclusion - DEI).

ຜົນຄະແນນດັ່ງກ່າວເຮັດໃຫ້ LDP ແລະ JIP ເຊິ່ງເປັນພັກຮ່ວມລັດຖະບານ ມີທີ່ນັ່ງຮ່ວມກັນເຖິງ 351 ທີ່ນັ່ງ, ຄວບຄຸມສຽງສ່ວນຫຼາຍຢ່າງເດັດຂາດໃນສະພາຜູ້ແທນລາດສະດອນທີ່ຈະຊ່ວຍໃຫ້ລັດຖະບານສາມາດລົງມະຕິລົບລ້າງການຕັດສິນໃຈຂອງສະພາສູງ ເຊິ່ງຝ່າຍລັດຖະບານຍັງຄົງເປັນສຽງສ່ວນໜ້ອຍ ແລະ ຍັງໃຫ້ອຳນາດແກ່ທາຄາອິຈິສາມາດປັບປຸງລັດຖະທຳມະນູນໃນໝວດທີ່ກ່ຽວກັບຄວາມໝັ້ນຄົງ ເຊິ່ງເປັນໜຶ່ງໃນຈຸດປະສົງຕົ້ນຕໍທີ່ນາງເຄີຍປະກາດໃນລະຫວ່າງການໂຄສະນາຫາສຽງ.

ເຖິງວ່າຈະຊະນະການເລືອກຕັ້ງຢ່າງລົ້ນເຫຼືອ, ແຕ່ຜູ້ນຳຍິງຄົນທຳອິດຂອງຍີ່ປຸ່ນ ຍັງຕ້ອງປະເຊີນກັບອຸປະສັກສຳຄັນຫຼາຍດ້ານ ໂດຍສະເພາະທີ່ກ່ຽວຂ້ອງກັບເສດຖະກິດ, ການຄຸ້ມຄອງລາຄາສິນຄ້າລາຄາແພງ ແລະ ການກະຕຸ້ນເສດຖະກິດ ໂດຍບໍ່ໃຫ້ນັກລົງທຶນກັງວົນເລື່ອງໜີ້ສິນສາທາລະນະ.

ສື່ມວນຊົນທ້ອງຖິ່ນລາຍງານວ່າ ຍີ່ປຸ່ນຈະຮຽກປະຊຸມລັດຖະສະພາສະໄໝພິເສດ ໃນວັນທີ 18 ກຸມພາ ເພື່ອເລືອກຕັ້ງນາຍົກລັດຖະມົນຕີ. ອີງຕາມການລາຍງານຂອງສຳນັກຂ່າວຈິຈິ (Jiji), ລັດຖະທຳມະນູນຂອງຍີ່ປຸ່ນກຳນົດວ່າ ຕ້ອງມີການຮຽກປະຊຸມລັດຖະສະພາສະໄໝພິເສດພາຍໃນ 30 ວັນ ຫຼັງຈາກການເລືອກຕັ້ງສະພາຜູ້ແທນລາດສະດອນ ເພື່ອແຕ່ງຕັ້ງນາຍົກລັດຖະມົນຕີ. ໃນວັນເປີດກອງປະຊຸມ, ຄະນະລັດຖະມົນຕີຊຸດປັດຈຸບັນຈະລາອອກພ້ອມກັນ; ຫຼັງຈາກນັ້ນ, ສະພາຕ່ຳທີ່ໄດ້ຮັບການເລືອກຕັ້ງໃໝ່ ແລະ ສະພາສູງຈະລົງຄະແນນສຽງແຍກກັນ ເພື່ອແຕ່ງຕັ້ງນາຍົກລັດຖະມົນຕີຜູ້ໃໝ່ ເຊິ່ງຈະສ້າງຕັ້ງຄະນະລັດຖະມົນຕີຊຸດໃໝ່ຕໍ່ໄປ.

ໃນການເລືອກຕັ້ງເພື່ອແຕ່ງຕັ້ງນາຍົກລັດຖະມົນຕີ, ຜູ້ສະໝັກທີ່ໄດ້ຮັບຄະແນນສຽງສ່ວນຫຼາຍໃນຮອບທຳອິດຂອງການລົງຄະແນນໃນແຕ່ລະສະພາຈະເປັນຜູ້ຊະນະໂດຍກົງ; ຖ້າບໍ່ມີຜູ້ສະໝັກຄົນໃດໄດ້ຮັບຄະແນນສຽງສ່ວນຫຼາຍ, ຜູ້ທີ່ໄດ້ຮັບຄະແນນສຽງສູງສຸດສອງອັນດັບທຳອິດ ຈະເຂົ້າສູ່ການລົງຄະແນນສຽງຮອບທີສອງ ໂດຍຜູ້ຊະນະຈະຕັດສິນຈາກຄະແນນສຽງສ່ວນຫຼາຍທຳມະດາ. ຖ້າທັງສອງສະພາ ສະເໜີຊື່ຜູ້ສະໝັກທີ່ແຕກຕ່າງກັນ ແລະ ບໍ່ສາມາດຕົກລົງກັນໄດ້ຫຼັງຈາກການປຶກສາຫາລື, ລັດຖະທຳມະນູນລະບຸວ່າ ການຕັດສິນໃຈຂອງສະພາຜູ້ແທນລາດສະດອນ ເຊິ່ງມີອຳນາດຫຼາຍ ຈະເປັນທີ່ສິ້ນສຸດ.

ເນື່ອງຈາກປັດຈຸບັນພັກເສລີປະຊາທິປະໄຕ ມີທີ່ນັ່ງຫຼາຍກວ່າສອງສ່ວນສາມໃນສະພາຕ່ຳ, ສື່ມວນຊົນຍີ່ປຸ່ນຈຶ່ງເຊື່ອວ່າ ນາຍົກລັດຖະມົນຕີ ຊານາເອະ ທາຄາອິຈິ ເຊິ່ງເປັນປະທານ LDP ມີໂອກາດເກືອບແນ່ນອນທີ່ຈະໄດ້ຮັບໄຊຊະນະໃນການເລືອກຕັ້ງເພື່ອແຕ່ງຕັ້ງນາຍົກລັດຖະມົນຕີຄັ້ງນີ້.

# ປະທານລັດຖະສະພາ Kyrgyz ລາອອກ



(Xinhua) - ນູຣ໌ລັນເບັກ ຕູຣ໌ກຸນເບັກ ອູລູ (Nurlanbek Turgunbek uulu) ປະທານສະພາສູງສຸດ ຫຼື ລັດຖະສະພາ ແຫ່ງ ສາທາລະນະລັດກຽກກິດ ຫຼື ກຽກກິດສະຖານ ໄດ້ປະກາດການຕັດສິນໃຈລາອອກໃນລະຫວ່າງກອງປະຊຸມລັດຖະສະພາເມື່ອວັນພະຫັດທີ 12 ກຸມພາຜ່ານມາ, ຕາມລາຍງານຈາກເວັບໄຊທາງການຂອງລັດຖະສະພາ.

ຕູຣ໌ກຸນເບັກ ອູລູ ກ່າວວ່າ "ຄວາມຂັດແຍ້ງທາງການເມືອງບາງຢ່າງ" ໄດ້ເກີດຂຶ້ນໃນປະເທດເມື່ອບໍ່ດົນມານີ້; "ມື້ນີ້, ຂ້າພະເຈົ້າໄດ້ຕັດສິນໃຈລາອອກຈາກຕຳແໜ່ງປະທານລັດຖະສະພາກຽກກິດໂດຍສະໝັກໃຈ, ນີ້ແມ່ນການຕັດສິນໃຈສ່ວນຕົວຂອງຂ້າພະເຈົ້າ". ເຂົາໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຈັດຕັ້ງປະຕິບັດຢ່າງເຕັມທີ່ ໃນການປະຕິຮູບທາງການທີ່ເມືອງລິເລີ່ມໂດຍປະທານາທິບໍດີ ຊາດີຣ໌ ຈາປາຣອຟ (Sadyr Japarov) ແລະ ການຮັກສາສະຖຽນລະພາບທາງການເມືອງໃນປະເທດ "ດ້ວຍຄວາມຮັກຊາດ ແລະ ຜົນປະໂຫຍດຂອງລັດເປັນແຮງຊຸກດັນ, ຂ້າພະເຈົ້າຈຶ່ງຕັດສິນໃຈເຊັ່ນນີ້" ທັງກ່າວຕື່ມວ່າ ຕົນພ້ອມທີ່ຈະສືບຕໍ່ຮັບໃຊ້ປະເທດຊາດໃນຖານະເປັນສະມາຊິກລັດຖະສະພາທຳມະດາ.

ຕູຣ໌ກຸນເບັກ ອູລູ ອາຍຸ 48 ປີ ໄດ້ຮັບເລືອກຕັ້ງເຂົ້າສູ່ລັດຖະສະພາໃນປີ 2021, ໄດ້ຮັບເລືອກເປັນປະທານລັດຖະສະພາຄັ້ງທຳອິດໃນເດືອນຕຸລາ 2022 ແລະ ໄດ້ຮັບເລືອກໃຫ້ດຳລົງຕຳແໜ່ງນີ້ອີກຄັ້ງໃນເດືອນທັນວາ 2025.

ສະພາສູງສຸດ ເປັນອົງການນິຕິບັນຍັດທີ່ມີສະມາຊິກ 90 ຄົນ, ມີອາຍຸການ 5 ປີ.

# ສະພາຕ່ຳສະຫະລັດ ຜ່ານຮ່າງກົດໝາຍການເລືອກຕັ້ງ ກຳນົດກົດໃໝ່ກ່ຽວກັບການສະແດງບັດປະຈຳຕົວຜູ້ມີສິດເລືອກຕັ້ງ




(Xinhua) - ວັນທີ 11 ກຸມພາຜ່ານມາ, ສະພາຜູ້ແທນປະຊາຊົນສະຫະລັດ ທີ່ພັກຣີພັບລີກັນມີສຽງສ່ວນຫຼາຍ ໄດ້ຜ່ານຮ່າງກົດໝາຍການເລືອກຕັ້ງ ໂດຍກຳນົດໃຫ້ຜູ້ມີສິດເລືອກຕັ້ງຕ້ອງສະແດງບັດປະຈຳຕົວ ແລະ ເອກະສານຢັ້ງຢືນຕົວຕົນເປັນພົນລະເມືອງ ສຳລັບການເລືອກຕັ້ງລະດັບລັດຖະບານກາງເຊິ່ງເປັນມາດຕະການທີ່ປະທານາທິບໍດີ ໂດນັລ ທຣຳ ຮຽກຮ້ອງໃຫ້ລັດຖະສະພາອອກກົດໝາຍ.

ຮ່າງກົດໝາຍສະບັບນີ້ ເຊິ່ງມີຊື່ວ່າ SAVE America Act ໄດ້ຮັບການອະນຸມັດດ້ວຍຄະແນນສຽງຢ່າງຫວຸດຫວິດ 218-213 ຈາກທັງໝົດ 435 ສຽງໃນສະພາຕ່ຳ, ໂດຍໄດ້ຮັບການສະໜັບສະໜູນເປັນເອກະສັນຈາກພັກຣີພັບລີກັນ ແລະ ມີການຄັດຄ້ານຈາກພັກເດໂມແຄຣັດເກືອບທັງໝົດຍົກເວັ້ນພຽງຄົນດຽວ.

ພາຍໃຕ້ຮ່າງກົດໝາຍດັ່ງກ່າວ, ລັດຕ່າງໆ ຈະຕ້ອງຮ້ອງຂໍເອກະສານຢັ້ງຢືນຕົວຕົນເປັນພົນລະເມືອງ ເຊັ່ນ: ໜັງສືຜ່ານແດນ ຫຼື ໃບແຈ້ງເກີດ ເພື່ອລົງທະບຽນຜູ້ມີສິດເລືອກຕັ້ງສຳລັບການເລືອກຕັ້ງລະດັບລັດຖະບານກາງ ແລະ ຍັງກຳນົດໃຫ້ຕ້ອງສະແດງບັດປະຈຳຕົວທີ່ມີຮູບຖ່າຍສຳລັບການລົງຄະແນນສຽງດ້ວຍຕົນເອງ; ສຳລັບບັດເລືອກຕັ້ງທາງໄປສະນີ, ກົດລະບຽບໃໝ່ກຳນົດໃຫ້ຜູ້ມີສິດເລືອກຕັ້ງ ຕ້ອງສະແດງສຳເນົາບັດປະຈຳຕົວທີ່ຖືກຕ້ອງ ເມື່ອຮ້ອງຂໍ ແລະ ເມື່ອສົ່ງບັດເລືອກຕັ້ງລ່ວງໜ້າ.

ຮ່າງກົດໝາຍການເລືອກຕັ້ງສະບັບນີ້ ເປັນປະເດັນໂຕ້ຖຽງກັນລະຫວ່າງພັກຣີພັບລີກັນແລະພັກເດໂມແຄຣັດ. ພັກຣີພັບລີກັນ ໄດ້ໂຕ້ຖຽງຊ້ຳແລ້ວຊ້ຳອີກວ່າ ການກຳນົດໃຫ້ສະແດງບັດປະຈຳຕົວ ແລະ ຫຼັກຖານການເປັນພົນລະເມືອງ ຈະຊ່ວຍປ້ອງກັນການສໍ້ໂກງການເລືອກຕັ້ງ; ຂະນະດຽວກັນ, ພັກເດໂມແຄຣັດໂຕ້ຖຽງວ່າ ຂໍ້ກຳນົດເຫຼົ່ານີ້ ອາດຫຼຸດຈຳນວນຜູ້ມາໃຊ້ສິດເລືອກຕັ້ງ ໂດຍສະເພາະໃນບັນດາຊົນເຜົ່າສ່ວນໜ້ອຍ, ຊາວໜຸ່ມແລະບຸກຄົນທີ່ມີລາຍໄດ້ຕ່ຳ ທີ່ອາດຈະມີຄວາມຫຍຸ້ງຍາກໃນການຂໍເອກະສານຢັ້ງຢືນຕົວຕົນ.

ຮ່າງກົດໝາຍດັ່ງກ່າວ ຈະສົ່ງຕໍ່ໄປຍັງສະພາສູງ ທີ່ພັກຣີພັບລີກັນມີສຽງສ່ວນຫຼາຍ 53 ຈາກທັງໝົດ 100 ທີ່ນັ່ງ; ບົດລາຍງານຂອງ NBC ລະບຸວ່າ "ຮ່າງກົດໝາຍນີ້ປະເຊີນກັບເສັ້ນທາງທີ່ຫຍຸ້ງຍາກໃນສະພາສູງ" ໂດຍສັງເກດວ່າສະມາຊິກສະພາສູງພັກຣີພັບລີກັນບາງຄົນ "ບໍ່ແນ່ໃຈຫຼືຄັດຄ້ານຮ່າງກົດໝາຍນີ້ ຢ່າງຈະແຈ້ງ".

ເຝົ້າໄວ້ ໄດ້ບົດຮຽນ

ວິເສດ ສະແຫວງສຶກສາ

# ລະວັງຢາພິດ ຕິດມາກັບສື່ສັງຄົມ



ພາຍໃຕ້ຫົວຂໍ້ນີ້, ຜູ້ຂຽນໄດ້ສັງລວມຫຍໍ້ໆ ຂ່າວກ່ຽວກັບມາດຕະການຂອງບາງປະເທດ ເພື່ອຈຳກັດຜົນຮ້າຍຂອງສື່ສັງຄົມອອນລາຍ ທີ່ອາດຈະກະທົບຕໍ່ຄົນໃນໄວເດັກ ແລະ ໄວໜຸ່ມ.

ຫ້າມຄົນອາຍຸຕ່ຳກວ່າ 15 ປີ ນຳໃຊ້ສື່ອອນລາຍ

ຂ່າວນີ້ອອກມາຈາກປະເທດດານມາກໃນເອີຣົບເໜືອ ໂດຍໄດ້ບອກວ່າ ທ່ານ ນາງ ເມັດເຕ ເຟຣເດຣິກເຊນ (Mette Frederiksen) ນາຍົກລັດຖະມົນຕີຂອງປະເທດນີ້ ໄດ້ເປີດເຜີຍໃຫ້ຮູ້ວ່າ ລັດຖະບານມີແຜນອອກກົດໝາຍໃນມໍ່ໆນີ້ ເພື່ອຫ້າມເດັກອາຍຸຕ່ຳກວ່າ 15 ປີ ນຳໃຊ້ສື່ສັງຄົມອອນລາຍ, ທ່ານນາຍົກໄດ້ຢ້ຳວ່າ ໂທລະສັບມືຖື ແລະ ສື່ສັງຄົມອອນລາຍ ກຳລັງເປັນໄພຂົ່ມຂູ່ຕໍ່ລູກຫຼານພວກເຮົາ. ໃນປັດຈຸບັນ, ເດັກນ້ອຍໃນປະເທດດານມາກ ປະມານ 60% ທີ່ມີອາຍຸລະຫວ່າງ 11-19 ປີຕິດນິດໄສຢູ່ເຮືອນຫຼາຍກວ່າຈະອອກໄປຄົບຄ້າສະມາຄົມກັບໝູ່ເພື່ອນຢູ່ທາງນອກ; ນີ້ອາດເປັນປາກົດການໜຶ່ງຂອງການເກັບໂຕ ຫຼື ຕີໂຕຫ່າງອອກຈາກສັງຄົມ ຍ້ອນມົວເມົາຢູ່ກັບສື່ອອນລາຍ ຈົນພາໃຫ້ເກີດອາການຊຶມເສົ້າ ແລະ ເກັບກົດ.

ກຣີມຫ້າມນັກຮຽນໃຊ້ໂທລະສັບມືຖືໃນໂຮງຮຽນສິງກະໂປ ໄດ້ຊື່ວ່າເປັນປະເທດເຂັ້ມງວດກວດຂັນທີ່ສຸດກ່ຽວກັບການນຳໃຊ້ສື່ສັງຄົມອອນລາຍແຕ່ດົນມາແລ້ວແລະໃນມໍ່ໆນີ້ກໍມີຂ່າວໃໝ່ໆອອກມາໃຫ້ຮູ້ວ່າ ທາງກະຊວງສຶກສາຂອງປະເທດນີ້ ໄດ້ປະກາດແຜນຫ້າມນັກຮຽນຂັ້ນມັດທະຍົມໃຊ້ໂທລະສັບມືຖື ແລະ ໂມງອັດສະລິຍະ (ໂມງທີ່ສາມາດໃຊ້ສື່ອອນລາຍ) ຕະຫຼອດມື້ຮຽນ, ແຕ່ບອກວ່າ ທາງໂຮງຮຽນອາດຈະຍົກເວັ້ນໃນບາງກໍລະນີທີ່ຈຳເປັນ. ແຜນຫ້າມດັ່ງກ່າວ ແມ່ນຜົນຂອງການສັງເກດ ແລະ ຕິດຕາມພຶດຕິກຳຂອງນັກຮຽນທີ່ໃຊ້ໂທລະສັບມືຖື ແລະ ໂມງອັດສະລິຍະ ມາໃນໄລຍະໜຶ່ງ ໂດຍມີຂໍ້ສະຫຼຸບວ່າ ນັກຮຽນທີ່ນຳໃຊ້ອຸປະກອນດັ່ງກ່າວ ມີບັນຫາໃນການນອນ, ການອອກກຳລັງກາຍ ແລະ ການພົວພັນສັງຄົມກັບໝູ່ເພື່ອນ ກໍຄືສະມາຊິກພາຍໃນຄອບຄົວ; ນອກນັ້ນ, ຍັງມີຜົນທາງສຸຂະພາບອີກດ້ວຍ. ພາຍໃຕ້ແຜນຫ້າມດັ່ງກ່າວ,ທາງໂຮງຮຽນຈະຈັດໃຫ້ມີບ່ອນເກັບມ້ຽນໂທລະສັບໄວ້ສະເພາະ ຫຼື ໃຫ້ນັກຮຽນມ້ຽນໄວ້ໃນກະເປົ໋ານັກຮຽນຕະຫຼອດຊົ່ວໂມງຮຽນ, ໃຜລະເມີດ ຈະມີຄວາມສ່ຽງຖືກປັບໃໝ.

ອີກປະເທດໜຶ່ງທີ່ອອກໜ້າພາທາງໃນການກຳຈັດຜົນຮ້າຍຈາກສື່ສັງຄົມອອນລາຍ ທີ່ອາດສົ່ງຜົນກະທົບຕໍ່ຄົນໃນໄວໜຸ່ມແລະໄວເດັກ.ດັ່ງຂ່າວທີ່ອອກມາວ່າ ທ່ານລັດຖະມົນຕີກະຊວງສື່ສານອິດສະຕຣາລີ ໄດ້ອອກມາເຕືອນບັນດາບໍລິສັດສື່ສັງຄົມອອນລາຍວ່າ ຖ້າບໍ່ປະຕິບັດຕາມຄຳສັ່ງທີ່ຫ້າມເດັກອາຍຸຕ່ຳກວ່າ 16 ປີ ນຳໃຊ້ສື່ສັງຄົມອອນລາຍ ກໍຈະມີຄວາມສ່ຽງຖືກປັບໃໝເປັນເງິນສູງເຖິງ 49.5 ລ້ານໂດລາ ອິດສະຕຣາລີ, ຄຳສັ່ງຫ້າມດັ່ງກ່າວ ໄດ້ເລີ່ມມີຜົນບັງຄັບໃຊ້ແຕ່ວັນທີ 10 ທັນວາ 2025 ເປັນຕົ້ນມາ. ທ່ານລັດຖະມົນຕີກ່າວຕື່ມວ່າ ເດັກນ້ອຍບາງຄົນອາດຈະຊອກວິທີເພື່ອຫຼີກລ່ຽງຂໍ້ຫ້າມດັ່ງກ່າວ; ດັ່ງນັ້ນ, ທາງເບື້ອງບໍລິສັດ ກໍຕ້ອງເຂັ້ມງວດກວດຂັນບໍ່ປ່ອຍໃຫ້ມີຊ່ອງວ່າງໃຫ້ເດັກໆໄດ້ສວຍໂອກາດ.




*#ບ່າວກະບື*

**ຄົນ**ຂາຍປຶ້ມແນະນຳໃຫ້ຍິງຄົນໜຶ່ງ ກ່ຽວກັບປຶ້ມເຫຼັ້ມອອກໃໝ່ໆຫຼ້າສຸດ ທີ່ໃສ່ຊື່ວ່າ "500 ເຫດຜົນເພື່ອແກ້ໂຕ ຕອນກັບເຮືອນເດິກ"

"ເປັນຫຍັງຈຶ່ງຄິດວ່າຂ້ອຍຊິສົນໃຈປຶ້ມຫົວນີ້?". ຍິງຄົນນັ້ນຖາມດ້ວຍນ້ຳສຽງຫຍຸ້ງໆ ກ່ຽວກັບປຶ້ມຄຸນຄ່າຕ່ຳໆຫົວນັ້ນ

ຄົນຂາຍປຶ້ມຕອບວ່າ "ເພາະວ່າຕອນໄປການເຊົ້າມື້ນີ້, ຜົວຂອງເຈົ້າໄດ້ຊື້ໄປເຫຼັ້ມໜຶ່ງແລ້ວ"

*#BAOKBU*

The book-seller recommended to a woman the latest look titled "500 REASONS FOR STAYING OUT LATE"

"Why will this interest me?," she asked disturbed at this bad taste.

"Because on his way to work this morning." replied the clerk, "your husband picked up a copy"

ທະນາຄານພັດທະນາລາວ
LDB Bank




## ໂຄສະນາ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 7 ກຸມພານີ້, ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ຊຸດທີ X (ຄະນະທີ 1) ຈຳນວນ 10 ທ່ານ ຍິງ 2 ທ່ານ ແລະ ບັນດາຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງບາຈຽງຈະເລີນສຸກ ຊຸດທີ V ພ້ອມດ້ວຍຄະນະຕິດຕາມ ໄດ້ລົງເຄື່ອນໄຫວໂຄສະນາຫາສຽງ ແລະ ສະເໜີຕົວຕໍ່ຜູ້ມີສິດເລືອກຕັ້ງ ຢູ່ບ້ານໜອງບຶກໃຫຍ່ (ກຸ່ມ 2), ບ້ານກວາງຊີ ແລະ ບ້ານໂພນທອງ (ກຸ່ມ 1 ແກ້ງເກຍ) ເມືອງບາຈຽງຈະເລີນສຸກ ເຊິ່ງໄດ້ຮັບການຕ້ອນຮັບຢ່າງອົບອຸ່ນຈາກການນຳເມືອງ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນກຸ່ມບ້ານ.

ໃນການໂຄສະນາຫາສຽງ,ບັນດາຜູ້ສະໝັກຮັບເລືອກຕັ້ງໄດ້ຜັດປ່ຽນກັນສະເໜີຕົວ, ປະຫວັດການເຄື່ອນໄຫວໂດຍຫຍໍ້ຂອງຕົນ ແລະ ກ່າວຈຸດປະສົງໃນການເຄື່ອນໄຫວໂຄສະນາຫາສຽງ ເພື່ອໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ເຖິງຄວາມຮູ້,ຄວາມສາມາດ ແລະ ວິໄສທັດ ໃນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າຢູ່ໃນສະພາ; ນອກຈາກນີ້, ຍັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນ ທີ່ໄດ້ເອົາໃຈໃສ່ກະກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງ ພ້ອມທັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ຈົ່ງຍົກສູງຄວາມຮັບຜິດຊອບໃນການໄປໃຊ້ສິດປ່ອນບັດໃນວັນອາທິດທີ 22 ກຸມພາ 2026 ໃຫ້ກາຍເປັນປາງບຸນໃຫຍ່ຂອງຊາດ ໂດຍຮັບປະກັນໃຫ້ໄດ້ "ຄາດໝາຍ 400%" ຄື: 1) ຜູ້ມີສິດເລືອກຕັ້ງໄປປ່ອນບັດຄົບ 100%, 2) ການປ່ອນບັດຖືກຕ້ອງຕາມລະບຽບການ 100%, 3) ຮັບປະກັນຄວາມສະຫງົບ ແລະ ປອດໄພ 100% ແລະ 4) ການປ່ອນບັດມີຄວາມໂປ່ງໃສ ແລະ ສຳເລັດທັນຕາມກຳນົດເວລາ100%.

ເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ມີຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຈຳນວນ 20 ທ່ານ ຍິງ 5 ທ່ານ, ເລືອກເອົາ 15 ທ່ານ ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງບາຈຽງຈະເລີນສຸກ ມີຈຳນວນ 7 ທ່ານ ຍິງ 2 ທ່ານ, ເລືອກເອົາ 5 ທ່ານ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊີ້ງອຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລີວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ